ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21-24 ກັນຍາ 2022
ປີທີ 11
ສະບັບທີ 877

## ປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງຄະນະຜູ້ແທນ ແຫ່ງ ຣາຊະອານາຈັກໄທ

(ສພຊ) ໃນວັນທີ 19 ກັນຍາ 2022 ທີ່ສະພາແຫ່ງຊາດ (ສພຊ) ທ່ານ ພົນເອກ ບຸນສ້າງ ນຽມປຣະດິດ ປະທານກຳມາທິການທະຫານ ແລະ ຄວາມໝັ້ນຄົງຂອງລັດວຸດທິສະພາແຫ່ງຣາຊະອານາຈັກໄທ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ.

ທ່ານປະທານສະພາແຫ່ງຊາດລາວ ໄດ້ສະແດງຍິນດີຕ້ອນທ່ານປະທານກຳມາທິການທະຫານ ແລະ ຄວາມໝັ້ນຄົງຂອງລັດ ແຫ່ງຣາຊະອານາຈັກໄທ ພ້ອມດ້ວຍຄະນະ ຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນໃນການເສີມຂະ



ຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ຖານບ້ານໃກ້ເຮືອນຄຽງ ລະຫວ່າງສອງປະເທດລາວ ແລະ ໄທ; ເວົ້າລວມ ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ໃຫ້ຈະເລີນງອກງາມ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດ ແລະ ການພັດທະນາແບບຍືນຍົງ ພ້ອມທັງໄດ້ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ, ກິງຈັກການຈັດຕັ້ງຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາບການເຄື່ອນໄຫວຂອງສະພາແຫ່ງຊາດໂດຍຫຍໍ້.

ໂອກາດດຽວກັນນີ້, ທ່ານ ພົນເອກ ບຸນສ້າງ ນຽມປຣະດິດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນໃນຄັ້ງນີ້ ແລະ ໄດ້ແຈ້ງໃຫ້ຊາບເຖິງຈຸດປະສົງໃນການມາຢ້ຽມຢາມຄັ້ງນີ້ ເພື່ອເຊື່ອມສາຍສຳພັນໄມຕີໃຫ້ເຂັ້ມແຂງ, ຊຸກຍູ້ສົ່ງເສີມການຮ່ວມມືແບບທະວີພາຄີ ແລະ ພະຫຸພາຄີ ໃນເວທີພາກພື້ນ ແລະ ສາກົນ ພ້ອມທັງແຈ້ງໃຫhຊາບກ່ຽວກັບວຽກງານກອງທັບ ວ່າກອງທັບໄທໃນປັດຈຸບັນ ແມ່ນປະຕິບັດໜ້າທີ່ປະກອບສ່ວນອັນສຳຄັນໃນໂຄງການພັດທະນາຕ່າງໆ ຂອງເຈົ້າຊີວິດໄທ; ໃນນັ້ນ, ມີ

ອ່ານຕໍ່ໜ້າ 2

## ກສຕສ ສຳມະນາກ່ຽວກັບການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ




ໜ້າ 2

## ກມຍທ ປຶກສາຫາລືຮ່ວມກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ

(ສພຊ) ວັນທີ 16 ກັນຍາ ຜ່ານມາ, ທີ່ຫໍສະພາແຫ່ງຊາດ ກຳມາທິການຍຸຕິທຳ (ກມຍທ) ສະພາແຫ່ງຊາດ ໄດ້ສຳເລັດກອງປະຊຸມປຶກສາຫາລືວຽກງານຈຳນວນໜຶ່ງ ເພື່ອກະກຽມເນື້ອໃນລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ວຽກການສ້າງນິຕິກຳຮ່ວມ ລະຫວ່າງ ກຳມາທິການຍຸຕິທຳ ກັບ ສານປະຊາຊົນສູງສຸດ ແລະ ອົງ



ອ່ານຕໍ່ໜ້າ 2

## ການທົດລອງການໃຊ້ອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ



ໜ້າ 2

## ຍົກສູງຂີດຄວາມສາມາດໃຫ້ແກ່ກຳມະການຂອງກຳມາທິການຍຸຕິທຳ

(ສພຊ) ໃນຕອນເຊົ້າຂອງວັນທີ 21 ກັນຍາ 2022, ທີ່ສະໂມສອນຂອງແຂວງຈຳປາສັກ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ, ໄດ້ເປີດກອງປະຊຸມຍົກສູງຂີດຄວາມສາມາດ ໃຫ້ແກ່ກຳມະການຂອງ ກຳມາທິການຍຸຕິທຳສະພາແຫ່ງຊາດ, ຄະນະກຳມະການຍຸຕິທຳ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການຊ່ວຍວຽກ ໃນການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳ, ປະທານກຳມາທິການຍຸຕິທຳ ເຂົ້າຮ່ວມມີບັນດາທ່ານປະທານ, ຮອງປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການຍຸຕິທຳ, ຄະນະກຳມະການຍຸຕິທຳ ປກຊ-ປກສ ແລະ ສະມາຊິກສະພາປະຊາຊົນແຂວງ, ຈາກ 5 ແຂວງ ຄື: ສະຫວັນນະເຂດ, ສາລະ

ອ່ານຕໍ່ໜ້າ 3

## ສພຊ ໄດ້ຮັບເຄື່ອງຊ່ວຍເຫລືອອຸປະກອນການແພດ



(ສພຊ) ບໍລິສັດ ຈິນສຸຍເສີນ ເຕັກໂນໂລຊີ ກະສິກຳລາວ ຈຳກັດ ໄດ້ມອບອຸປະກອນການແພດ-ເຄື່ອງເອໂກ ຈຳນວນ 1 ຊຸດ ລວມມູນຄ່າ 96 ລ້ານກວ່າກີບ ມອບໃຫ້ສະພາແຫ່ງຊາດ ເພື່ອນຳໄປຕໍ່ໃຫ້ໂຮງໝໍເມືອງໂພນໄຊ ແຂວງຫລວງພະບາງ ນຳໃຊ້ເຂົ້າໃນວຽກງານສາທາລະນະ

ອ່ານຕໍ່ໜ້າ 2

## ເຜີຍແຜ່ກ່ຽວກັບການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ




(ສພຊ) ສະພາແຫ່ງຊາດ ຮ່ວມກັບກະຊວງການຕ່າງປະເທດ ໄດ້ຈັດກອງປະຊຸມເຜີຍແຜ່ກ່ຽວກັບການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ ແລະ ສົ່ງເສີມການມີສ່ວນຮ່ວມຂອງຫລາຍ

ອ່ານຕໍ່ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5

## ກຕສທ...



(ສພຊ) ໃນລະຫວ່າງວັນທີ 12-13 ກັນຍາ 2022 ທີ່ ນະຄອນປາກເຊ ແຂວງຈຳປາສັກ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສຳມະນາ ກ່ຽວກັບ ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ, ທິດທາງການປັບປຸງໂຄງສ້າງລາຄາໄຟຟ້າ, ການພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ ແລະ ການພັດທະນາທ່າບົກ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ມີທ່ານ ຣສ. ປອ ລິນຄຳ ດວງສະຫວັນ ປະທານ ກສຕສ; ບັນດາຮອງປະທານ ກສຕສ, ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່; ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ; ຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງ ເພື່ອລະດົມຄຳຄິດຄຳເຫັນຕໍ່ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ, ທິດທາງການປັບປຸງໂຄງສ້າງລາຄາໄຟຟ້າຂອງລັດວິສາຫະກິດໄຟຟ້າລາວ ແລະ ການພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ; ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມເຂົ້າໃຈກ່ຽວກັບການພັດທະນາທ່າບົກ ໃນຂອບເຂດທົ່ວປະເທດຕາມທີ່ຄະນະກຳມາທິການອົງການສະຫະປະຊາຊາດດ້ານເສດຖະກິດ ແລະ ສັງຄົມ ປະຈຳພາກພື້ນອາຊີ-ປາຊີຟິກ ໃຫ້ສັດຕະຍາບັນ ເປັນຕົ້ນການກຳນົດທີ່ຕັ້ງ, ສິດ, ໜ້າທີ່ ແລະ ພາລະບົດບາດຂອງແຕ່ລະທ່າບົກ ແລະ ບັນຫາອື່ນທີ່ກ່ຽວຂ້ອງ; ຮັບຟັງການລາຍງານກ່ຽວກັບ ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານຢູ່ທ່າບົກ 3 ແຫ່ງ ທີ່ໄດ້ດຳເນີນທຸລະກິດ ແລະ ເປີດບໍລິການແລ້ວ; ເພື່ອລະດົມແນວຄຳຄິດຄຳເຫັນຕໍ່ທິດທາງການພັດທະນາທ່າບົກ ໃຫ້ມີຄວາມແທດເໝາະກັບສະພາບຈຸດພິເສດທີ່ຕັ້ງຂອງແຕ່ລະທ່າບົກ ທັງເພື່ອເປັນຂໍ້ມູນພື້ນຖານລາຍງານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ມີທິດຊີ້ນຳ.

ກອງປະຊຸມ ໄດ້ຮັບຟັງການລາຍງານການພັດທະນາທ່າບົກ ຂອງ ສປປລາວ ແລະ ການຈັດຕັ້ງປະຕິບັດວຽກງານທ່າບົກ 3 ແຫ່ງ ທີ່ເປີດບໍລິການແລ້ວ ຈາກທ່ານ ປອ. ບຸນຕາ ອ່ອນນາວົງ ຫົວໜ້າກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ; ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານທ່າບົກ ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໂດຍທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ການຄຸ້ມຄອງດ່ານກວດກາຄົນ ເຂົ້າ-ອອກເມືອງ ທີ່ຕິດພັນກັບວຽກງານທ່າບົກ ໂດຍທ່ານ ພອ. ສາຍສະໝິງ ສີວິໄລ ຫົວໜ້າກົມຕຳຫລວດກວດກາຄົນເຂົ້າ-ອອກເມືອງ (ຕມ), ທິດທາງການປັບປຸງໂຄງສ້າງລາຄາໄຟຟ້າ ແລະ ການພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ ໂດຍທ່ານ ນາງ ຈັນສະຫວາດ ບຸບຜາ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວໂດຍທ່ານຈັນທະບູນ ສຸກອາລຸນ ຜູ້ອຳນວຍການລັດວິສາຫະກິດໄຟຟ້າລາວ, ການປະຕິຮູບລັດວິສາຫະກິດໄຟຟ້າລາວ ຈາກທ່ານ ສຸລິວັດ ສຸວັນນະຈູມຄຳ ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ ກະຊວງການເງິນ ແລະ ໄດ້ຮັບຟັງຄຳເຫັນຂອງກຳມາທິການ ກສຕສ ກ່ຽວກັບວຽກງານໄຟຟ້າ ໂດຍທ່ານ ຄຳມ່ອນ ຊົມສີຫາປັນຍາ ຮອງປະທານກຳມາທິການ ກສຕສ.

ໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ສະເໜີໃຫ້ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ຮີບຮ້ອນສ້າງ, ປັບປຸງນິຕິກຳທີ່ກ່ຽວຂ້ອງໃຫ້ຈະແຈ້ງ, ຊັດເຈນ ແລະ ມີກົນໄກການປະສານງານທີ່ກົມກຽວ ລະຫວ່າງ ຂະແໜງການກ່ຽວຂ້ອງໃຫ້ເປັນລະບົບ, ປະເມີນກວດກາຄືນການພັດທະນາ ແລະ ກຳນົດຈຸດທີ່ຕັ້ງຂອງທ່າບົກ ໂດຍໃຫ້ສອດຄ່ອງກັບສະພາບພື້ນທີ່ຕົວຈິງຂອງແຕ່ລະຈຸດທ່າບົກທີ່ຈະພັດທະນາໃນຕໍ່ໜ້າ ພ້ອມທັງມີນະໂຍບາຍສົ່ງເສີມເພື່ອເປັນການດຶງດູດການລົງທຶນ ແລະ ຊຸກຍູ້ໃຫ້ຜູ້ປະກອບການທຸລະກິດຂົນສົ່ງເຂົ້ານຳໃຊ້ບໍລິການທ່າບົກໃຫ້ຫລາຍຂຶ້ນ ເພື່ອເປັນການຈັດເກັບລາຍຮັບເຂົ້າປະຕູດຽວ ແລະ ຕໍ່ກັບບົດລາຍງານ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ແລະ ລັດວິສາຫະກິດໄຟຟ້າລາວ ກ່ຽວກັບ ທິດທາງການປັບປຸງໂຄງສ້າງລາຄາໄຟຟ້າ, ການພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ, ການດຳເນີນທຸລະກິດ ຂອງລັດວິສາຫະກິດໄຟຟ້າລາວ ແລະ ການປະຕິຮູບລັດວິສາຫະກິດໄຟຟ້າລາວ ສະເໜີໃຫ້ຄົ້ນຄວ້າ, ວິເຄາະ-ວິໄຈ ຢ່າງລົງເລິກ; ປັບປຸງໂຄງສ້າງລາຄາໄຟຟ້າ ໃນກຸ່ມທີ່ລັດຖະບານມີນະໂຍບາຍສົ່ງເສີມ ເປັນຕົ້ນ ຊົນລະປະທານ, ປູກຝັງ, ລ້ຽງສັດ-ປະມົງ, ໂຮງງານປຸງແຕ່ງກະສິກຳ ທີ່ຕິດພັນກັບການຄໍ້າປະກັນສະບຽງອາຫານ ເຊິ່ງຕິດພັນກັບການດຳລົງຊີວິດ ແລະ ການແຂ່ງຂັນ ຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ຂອງປະເທດເຮົາ; ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສືບຕໍ່ພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ, ເອົາໃຈໃສ່ປະຕິບັດແຜນການຊົດເຊີຍຜົນກະທົບດ້ານສິ່ງແວດລ້ອມ, ສັງຄົມ-ທຳມະຊາດ ໃນການສ້າງແລວສາຍສົ່ງໄຟຟ້າ; ພ້ອມນັ້ນ, ທ່ານຍັງໄດ້ສະເໜີໃຫ້ກະຊວງກ່ຽວຂ້ອງ ນຳໄປພິຈາລະນາປັບປຸງແກ້ໄຂໃຫ້ແທດເໝາະກັບສະພາບເສດຖະກິດ-ສັງຄົມໃນປັດຈຸບັນ.

ຈາກນັ້ນ, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດ ທ່າບົກ-ວັງເຕົ່າ ຕື່ມອີກ.

(ອານຸສອນ ພູມມີທອນ)



## ການທົດລອງ...

(ສພຊ) ວັນທີ 14 ກັນຍາ ຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອັດຕະປື ໄດ້ສຳເລັດກອງປະຊຸມການທົດລອງການໃຫ້ອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ຮ່ວມກັບທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື ແລະ ທ່ານ ບຸນເສີດ ເສດທິລາດ ຮອງເຈົ້າແຂວງໆອັດຕະປື, ຜູ້ຊີ້ນຳຂົງເຂດວັດທະນະທຳ-ສັງຄົມ; ມີບັນດາທ່ານສະມາຊິກສະພາແຫ່ງຊາດຈາກ 7 ເຂດເລືອກຕັ້ງ, ຕາງໜ້າທູດດ້ານການສຶກສາ ແລະ ການປົກຄອງ ສະຖານທູດອົດສະຕາລີ ປະຈຳ ສປປລາວ, ຕາງໜ້າອົງການຢູນິເຊັບ ປະຈຳ ສປປ ລາວ, ຕາງໜ້າໂຄງການປົກປ້ອງສັງຄົມ ອົງການແຮງງານສາກົນ, ຊ່ຽວຊານໂຄງການປົກປ້ອງສັງຄົມ ປະຈຳອົງການຢູນິເຊັບ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າກົມ, ພະນັກງານທີ່ກ່ຽວຂ້ອງ ແລະ ພະແນກການອ້ອມຂ້າງແຂວງອັດຕະປື ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຈາກທ່ານ ບຸນເສີດ ເສດທິລາດ ກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງ ການປົກປ້ອງສັງຄົມ (ວຽກອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ) ໃນ 2 ເມືອງຄື: ເມືອງພູວົງ ແລະ ເມືອງສະໜາມໄຊ ແຂວງອັດຕະປື ເຊິ່ງການຈັດຕັ້ງປະຕິບັດການທົດລອງການໃຫ້ອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ ແມ່ນໄດ້ເປີດໂຕເປັນທາງການ ໃນວັນທີ 18 ມິຖຸນາ 2021 ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບໍລິສັດ ສະຕາວິນເທັກ ເຊິ່ງອົງການ (UNICEF) ເປັນຜູ້ໃຫ້ທຶນ, ໂຄງການຈັດຕັ້ງປະຕິບັດ ຢູ່ 2 ແຂວງ ຄື: ສະຫວັນນະເຂດ ແມ່ນເມືອງນອງ ແລະ ອັດຕະປື ແມ່ນເມືອງສະໜາມໄຊ ໄດ້ມີຜູ້ທີ່ລົງທະບຽນທັງໝົດແມ່ນ 1.114 ຄົນ ບໍ່ຄົບຕາມການວາງເປົ້າໝາຍຂອງໂຄງການ ຈຶ່ງໄດ້ຮັບຮອງເອົາອີກ 1 ເມືອງຄື: ເມືອງພູວົງ ຂອງແຂວງອັດຕະປື ການຈັດຕັ້ງປະຕິບັດຂອງແຂວງອັດຕະປື ຍັງໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບ ໂດຍແມ່ນທ່ານຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ສ່ວນເມືອງແມ່ນທ່ານຮອງເຈົ້າເມືອງເປັນຜູ້ຮັບຊອບ ພາຍຫລັງມີຄະນະດັ່ງກ່າວ ທາງໂຄງການ ກໍໄດ້ສົມທົບກັບພາກລັດດຳເນີນກິດຈະກຳດ້ວຍການເຝິກອົບຮົມໃຫ້ພະນັກງານທີ່ກ່ຽວຂ້ອງ ເຊິ່ງມີຂັ້ນແຂວງ, ຂັ້ນເມືອງ, ໂຮງໝໍເມືອງສະໜາມໄຊ ແລະ ໂຮງໝໍເມືອງພູວົງ ພ້ອມໂຮງໝໍນ້ອຍທີ່ຂຶ້ນກັບ 2 ເມືອງ 16 ແຫ່ງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ແລກປ່ຽນບົດຮຽນ ແລະ ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ເຊິ່ງກັນ ແລະ ກັນ; ນອກນັ້ນ, ຍັງໄດ້ຕິດຕາມການຈັດຕັ້ງໂຄງການປົກປ້ອງສັງຄົມ (ວຽກອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ) ຢູ່ເມືອງສະໜາມໄຊ ແລະ ເມືອງພູວົງ ແຂວງອັດຕະປື.

(ນາງ ກຸກກີກ ບຸດດາໄຊ)

## ປະທານ...

ເຖິງ 4.000 ກວ່າໂຄງການ, ປະກອບສ່ວນສຳຄັນໃນການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ SDGs; ພ້ອມນີ້, ກອງທັບຍັງເປັນກຳລັງສຳຄັນໃນການຊ່ວຍເຫລືອປະຊາຊົນໃນເວລາພົບໄພທຳມະຊາດ ແລະ ໄພພິບັດຕ່າງໆ.

ໃນໂອກາດດັ່ງກ່າວ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ຍັງສະເໜີໃຫ້ທ່ານປະທານກຳມາທິການທະຫານ ແລະ ຄວາມໝັ້ນຄົງຂອງລັດວຸດທິສະພາໄທ ສືບຕໍ່ພົວພັນພົບປະເຮັດວຽກຮ່ວມກັບກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະພາແຫ່ງຊາດລາວ ໃນການຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆ ລະຫວ່າງສອງປະເທດໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ປາກົດຜົນເປັນຈິງ. ພ້ອມນີ້, ກໍໄດ້ຝາກຄວາມຢື້ຢາມຖາມຂ່າວເຖິງພະນະທ່ານ ຊວນ ຫລີກໄພ ປະທານສະພາຜູ້ແທນລາສະດອນໄທ ແລະ ພະນະທ່ານ ພອນເພັດ ພິຊິດຊົນໄຊ ປະທານວຸດທິສະພາໄທ ແລະ ບັນດາທ່ານການນຳຂອງລັດຖະສະພາໄທ ແລະ ສະແດງຄວາມຂອບໃຈ ຕໍ່ລັດຖະບານ, ລັດຖະສະພາ ແລະ ປະຊາຊົນໄທ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫລືອລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ເປັນຕົ້ນແມ່ນການຊ່ວຍເຫລືອອຸປະກອນທາງການແພດ ໃນໄລຍະທີ່ ສປປລາວ ໄດ້ປະເຊີນໜ້າກັບການແຜ່ລະບາດຂອງພະຍາດໂຄວິດ-19 ຜ່ານມາ ແລະ ອື່ນໆ ທັງອວຍພອນໃຫ້ບັນດາທ່ານໃນຄະນະ ໄດ້ຮັບຜົນສຳເລັດຈາກການຢ້ຽມຢາມ ສປປລາວ ໃນຄັ້ງນີ້.

## ສພຊ...

ສຸກຂອງໂຮງໝໍດັ່ງກ່າວ.

ພິທີຄັ້ງນີ້, ໄດ້ຈັດຂຶ້ນໃນວັນທີ 15 ກັນຍາ 2022 ຢູ່ທີ່ຫໍສະພາແຫ່ງຊາດ ໂດຍຕາງໜ້າບໍລິສັດກ່າວມອບແມ່ນທ່ານ ຫາຍ ລໍຄຳສອນ ຜູ້ອຳນວຍການບໍລິສັດ ຈົນສຸຍເສີນ ເຕັກໂນໂລຊີ ກະສິກຳລາວ ຈຳກັດ ແລະ ກ່າວຮັບໂດຍທ່ານ ນາງ ມະນີວັນ ເຍຍປາວເຮີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ, ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ; ມີພາກສ່ວນກ່ຽວຂ້ອງຂອງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ໃນໂອກາດດຽວກັນ, ທ່ານ ນາງ ມະນີວັນ ເຍຍປາວເຮີ ຕາງໜ້າໃຫ້ຄະນະປະຈຳຂອງສະພາແຫ່ງຊາດ ມອບໃບຍ້ອງຍໍໃຫ້ບໍລິສັດ ຈົນສຸຍເສີນ ເຕັກໂນໂລຊີ ກະສິກຳລາວ ຈຳກັດ ເຊິ່ງຮັບໂດຍທ່ານ ຫາຍ ລໍຄຳສອນ ເນື່ອງຈາກວ່າບໍລິສັດດັ່ງກ່າວ ມີຜົນງານດີເດັ່ນໃນການປະກອບສ່ວນຊ່ວຍເຫລືອອຸປະກອນການແພດໃນຄັ້ງນີ້ອີກດ້ວຍ.

(ນາງ ປາກາລັກ ພົມມີໄຊ)

## ກມຍທ...

ການໄອຍະການປະຊາຊົນສູງສຸດ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຮ່ວມກັນໃນຕໍ່ໜ້າ ໃຫ້ມີຄວາມໂລ່ງລ່ຽນ ແລະ ຄ່ອງແຄ້ວກວ່າເກົ່າ ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳແພງ ວິລະພັນ ປະທນກຳມາທິການຍຸຕິທຳ ສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ບຸນຂວາງ ທະວິສັກ ຮອງປະທານສານປະຊາຊົນສູງສຸດ ແລະ ທ່ານ ຄຳເພັດ ສົມວໍລະຈິດ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ; ມີບັນດາຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງຈຳນວນໜຶ່ງ.

ກອງປະຊຸມ ໄດ້ຮັບຟັງບົດສະຫລຸບ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ; ບົດລາຍງານ ຜົນການປະເມີນການຈັດຕັ້ງປະຕິບັດ 4 ກົດໝາຍ ໃນຂົງເຂດຍຸຕິທຳ ແລະ ວຽກງານການສ້າງນິຕິກຳຮ່ວມ ລະຫວ່າງ ກຳມາທິການຍຸຕິທຳກັບສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນ, ປຶກສາຫາລື ເພື່ອເອກະພາບກັນກະກຽມ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຄາດໝາຍ.



## ຍົກສູງຂີດຄວາມ...

ວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື; ບັນດາທ່ານຄະນະກົມ, ຄະນະພະແນກ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກ: ໂຄງການສ້າງຄວາມອາດສາມາດໃຫ້ແກ່ສະພາແຫ່ງຊາດ (WFD) ແລະ ທຶນສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

ທັງນີ້, ເພື່ອເປັນການຍົກສູງຂີດຄວາມສາມາດ ໃຫ້ແກ່ກຳມະການຂອງກຳມາທິການຍຸຕິທຳ, ຄະນະກຳມະການຍຸຕິທຳ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ກົງຈັກເສນາທິການຊ່ວຍວຽກ ທີ່ຮັບຜິດຊອບວຽກງານ ຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງສະພາປະຊາຊົນຂັ້ນແຂວງ ແລະ ສະພາແຫ່ງຊາດ ໄດ້ຮັບການຍົກລະດັບຮັບຮູ້ຄວາມສາມາດ ກ່ຽວກັບກົນໄກການຮັບຄຳຮ້ອງຂໍຄວາມເປັນທຳ, ການຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ແລະ ວິທີການຄົ້ນຄວ້າ, ວິເຄາະ, ວິໄຈ ຄຳຮ້ອງຂໍຄວາມເປັນທຳລວມທັງຂັ້ນຕອນການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໃຫ້ມີປະສິດທິພາບ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດ ໃນການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ໃຫ້ມີຜົນສັກສິດຢ່າງເຕັມສ່ວນ.

ໃນໂອກາດນີ້, ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໃຫ້ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ນຳເອົາເນື້ອໃນຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022 ມາເຜີຍແຜ່ ແລະ ແລກປ່ຽນຄຳຄິດຄຳເຫັນ ພ້ອມທັງນຳເອົາກົນໄກ ການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ກໍຄື ສະພາປະຊາຊົນຂັ້ນແຂວງ ແລະ ຂັ້ນຕອນ ວິທີການ ໃນການຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ທີ່ມາຍື່ນຄຳຮ້ອງຂໍຄວາມເປັນທຳ ມານຳສະເໜີແລກປ່ຽນຄວາມຄິດເຫັນນຳບັນດາທ່ານ ເພື່ອເປັນການສ້າງຄວາມເຂົ້າໃຈເປັນເອກະພາບທາງດ້ານທັດສະນະ ແລະ ວິທີການ ໃນການຈັດຕັ້ງປະຕິບັດກົດໝາຍ ກໍຄືວິທີການໃນການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ; ພ້ອມດຽວກັນນັ້ນ, ກໍເພື່ອເປັນການຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານຄຳຮ້ອງຂໍຄວາມເປັນທຳ ສາມາດປະຕິບັດໜ້າທີ່ວຽກງານຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເຊິ່ງຈະໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປີ 2022 ມີຄວາມເປັນເອກະພາບ ໂດຍການນຳເອົາບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ໃນໄລຍະຜ່ານມາ ກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ມາເປັນພື້ນຖານ, ນຳສະເໜີແລກປ່ຽນຄວາມເຫັນນຳບັນດາທ່ານ ແນ່ໃສ່ຫັນເອົາການຄຸ້ມຄອງລັດ, ການຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍໃຫ້ເຂົ້າສູ່ລວງເລິກ ແລະ ຊີວິດຕົວຈິງເທື່ອລະກ້າວ, ທັງເປັນການເພີ່ມທະວີບົດບາດຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການຕິດຕາມກວດກາການປະຕິບັດໜ້າທີ່ຂອງບັນດາອົງການທີ່ມີສິດອຳນາດ ໃນການແກ້ໄຂຄຳຮ້ອງທຸກ ໃຫ້ມີຄວາມຍຸຕິທຳ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປະຊາຊົນມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ຂະບວນການບໍລິຫານລັດຂັ້ນຕ່າງໆ ກໍຄືຂະບວນການດຳເນີນຄະດີຕາມຂະບວນຍຸຕິທຳເປັນຢ່າງດີ ສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍກຳນົດໄວ້.

ກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປີ 2016), ລົງເລິກຄົ້ນຄວ້າສົມທຽບເນື້ອໃນຂອງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ປີ 2022; ການເຜີຍແຜ່ບັນດາມາດຕາຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ພາກທີ I, II, III, IV ແລະ ພາກທີ V), ຈາກທ່ານ ນາງ ຫວັນໄຊ ຈັນທະລາ ຮອງຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ; ການສະເໜີບົດການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ຈາກທ່ານ ໄກມະນີ ເທບບົວລີ ວ່າການຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ແລະ ການສະເໜີບົດຮຽນ ການຕ້ອນຮັບ ແລະ ໃຫ້ຄຳປຶກສາ, ຮ່າງມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຮັບ ແລະ ໃຫ້ຄຳປຶກສາກ່ຽວກັບ ການຮ້ອງຂໍຄວາມເປັນທຳ ຈາກທ່ານ ກາວອນ ມະໂນກຸນ ຮອງຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງສ້າງສັນ, ມີຈຸດສຸມ ແລະ ກົງໄປກົງມາ.

ກອງປະຊຸມຈະໄດ້ດຳເນີນໄປເປັນ ເວລາ 3 ວັນ, ຈົນຮອດວັນທີ 23 ກັນຍາ 2022 ຈຶ່ງຈະສຳເລັດ.

(ນາງ ສຸພາວັນ ຫອມສະນິດ)




# ສສຊ ແລະ ສສຂ ເຜີຍແຜ່ຜົນສຳເລັດ ຂອງກອງປະຊຸມ ຢູ່ເມືອງລະມານ

(ສພຊ) ວັນທີ 13 ກັນຍາ ຜ່ານມານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ປະຈຳເຂດເລືອກຕັ້ງເມືອງລະມານ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ທີ່ສະໂມສອນເມືອງລະມານ ແຂວງເຊກອງ ນຳໂດຍທ່ານ ປອ. ແພງສີ ສີລາວີ ຄະນະປະຈຳພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ ທັງເປັນຮອງປະທານສະພາປະຊາຊົນແຂວງ, ທ່ານ ນາງ ທັດສະດາພອນ ຈັນທະມາດ ສສຊ ປະຈຳເຂດເລືອກຕັ້ງ ທັງເປັນຮອງປະທານກຳມາທິການບັນດາເຜົ່າສະພາແຫ່ງຊາດ ແລະ ທ່ານ ໄຊຍະຫວັດ ກ້ອນຄຳໝັ້ນ ສສຂທັງເປັນຫົວໜ້າເຂດເລືອກຕັ້ງເມືອງລະມານ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງດັ່ງກ່າວ ພ້ອມດ້ວຍຄະນະ ໂດຍມີ ຄະນະນຳພັກ-ລັດ, ຫົວໜ້າ-ຮອງຫົວໜ້າຫ້ອງການຂັ້ນເມືອງ, ສອງກຳລັງປະກອບອາວຸດ, ອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງບ້ານ 7 ບ້ານເທສະບານ ເຂົ້າຮ່ວມຕ້ອນຮັບ ແລະ ຮັບຟັງ 110 ຄົນ, ຍິງ 34 ຄົນ.

ໃນໂອກາດລົງເຄື່ອນໄຫວຄັ້ງນີ້, ບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງແນໃສ່ເຮັດໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງ ຢູ່ພາຍໃນເມືອງລະມານ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ ແລະ ເນື້ອໃນວຽກງານທີ່ສຳຄັນທີ່ໄດ້ພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາ 2 ຂັ້ນ; ຈາກນັ້ນ, ໄດ້ຮັບຟັງກ່ຽວກັບຄຳສະເໜີຂອງປະຊາຊົນ ເຊິ່ງມີຫລາຍບັນຫາທີ່ໄດ້ສະເໜີຕໍ່ ສສຊ-ສສຂ ຕໍ່ກັບຄຳສະເໜີດັ່ງກ່າວ, ບັນດາທ່ານ ສສຊ ແລະ ສສຂ ກໍໄດ້ຮັບເອົາຄຳຄິດຄຳເຫັນເພື່ອນຳໄປສະເໜີຕໍ່ຄະນະນຳຂັ້ນເທິງ ກໍຄືພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ພິຈາລະນາແກ້ໄຂຕາມຄວາມເໝາະສົມ.

(ນາງ ນາລີວັນ)



## ເຜີຍແຜ່...

ພາກສ່ວນໃນສັງຄົມ, ໃນວັນທີ 12 ກັນຍາ 2022 ທີ່ໂຮງແຮມແລນມາກ, ໂດຍການເປັນປະທານຮ່ວມຂອງທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແລະ ທ່ານ ໂພໄຊ ໄຂຄຳພິທູນ ຮອງລັດຖະມົນຕີກະຊວງການຕ່າງປະເທດ ເຂົ້າຮ່ວມມີຜູ້ຕາງໜ້າຈາກບັນດາກະຊວງອ້ອມຂ້າງ, ບັນດາຄະນະກົມຈາກສະພາແຫ່ງຊາດຈຳນວນໜຶ່ງ.

ຈຸດປະສົງ, ເພື່ອເຜີຍແຜ່ ແລະ ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເພື່ອສ້າງເຄືອຂ່າຍການປະສານງານ, ການຮ່ວມມື, ແລກປ່ຽນບົດຮຽນ ແລະ ຂໍ້ມູນ-ຂ່າວສານ ກັບສະພາແຫ່ງຊາດ ຕໍ່ວຽກງານດັ່ງກ່າວ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງປະຫວັດຄວາມເປັນມາ ແລະ ຄວາມຄືບໜ້າຂອງວາລະ 2030 ເພື່ອການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ; ການສະເໜີກ່ຽວກັບການເຊື່ອມສານ ປພຍ ຢູ່ ສປປ ລາວ; ການສະເໜີກ່ຽວກັບຕົວຊີ້ບອກ ປພຍ ຢູ່ ສປປລາວ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນສົນທະນາແລະປ່ຽນຄຳຄິດຄຳເຫັນເປັນເຊິ່ງກັນແລະກັນ.

ໃນຕອນທ້າຍ, ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ໄດ້ມີຄຳເຫັນສະຫລຸບ ແລະ ກ່າວປິດກອງປະຊຸມວ່າ:ກອງປະຊຸມໃນຄັ້ງນີ້ ຜູ້ເຂົ້າຮ່ວມໄດ້ນຳເອົາບົດຮຽນຕົວຈິງມາປະກອບຄຳເຫັນ, ເອົາໃຈໃສ່ຕິດຕາມ ແລະ ແລກປ່ຽນບົດຮຽນດ້ວຍບັນຍາກາດອັນຟົດຟື້ນ. ພົ້ນເດັ່ນແມ່ນກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຄາດໝາຍທີ່ບໍ່ທັນສາມາດບັນລຸໄດ້ ເປັນຕົ້ນແມ່ນຂົງເຂດສຶກສາ ແລະ ສາທາ; ການໂຄສະນາເຜີຍແຜ່ເປົ້າໝາຍການພັດທະນາແບບຍືນຍົງຜ່ານໂຄງການແຂ່ງຂັນການເວົ້າ ແລະ ສື່ອອນລາຍຕ່າງໆ; ການຊຸກຍູ້ສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ເປົ້າໝາຍພັດທະນາແບບຍືນຍົງ; ແລະ ການລາຍງານ, ປະເມີນຜົນ ການຈັດຕັ້ງປະຕິບັດເປົ້າໝາຍຕ່າງໆ; ຄວາມຕ້ອງການທີ່ພວກເຮົາຕ້ອງການ ທີ່ຕ້ອງໄດ້ຄົ້ນຄວ້າພິຈາລະນາເພື່ອສຸມໃສ່ການພັດທະນາ ແລະ ບັນລຸເປົ້າໝາຍຕາມແຜນການ.

ຜົນສຳລັດຂອງກອງປະຊຸມເຜີຍແຜ່ໃນຄັ້ງນີ້ ແມ່ນໝາກຜົນລວມຂອງສອງພາກສ່ວນ ກໍຄື ສະພາແຫ່ງຊາດ ແລະ ກະຊວງການຕ່າງປະເທດ; ພາຍຫລັງສຳເລັດກອງປະຊຸມແລ້ວ ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມນຳເອົາເນື້ອໃນຈິດໃຈຂອງກອງປະຊຸມ ໄປລາຍງານຕໍ່ຄະນະນຳຂອງຕົນ ເພື່ອໄປປັບໃຊ້ໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ສອດຄ່ອງ, ໂດຍສະເພາະແມ່ນຄົ້ນຄວ້າບັນດາຕົວຊີ້ບອກຜ່ານການບັນທຶກ ແລະ ເຊື່ອມສານຕົວເລກສະຖິຕິ ເນື້ອໃນ, ສິ່ງທ້າທາຍ ແລະ ກາລະໂອກາດຕໍ່ກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປລາວ ທີ່ຕິດພັນກັບຂົງເຂດວຽກງານຂອງຕົນໃຫ້ໄປຕາມໄລຍະຂອງການຈັດຕັ້ງປະຕິບັດ ໂດຍອີງໃສ່ທິດທາງລວມຂອງພັກ ແລະ ລັດຖະບານ ເພື່ອບັນລຸຂໍ້ຄົງຄ້າງທີ່ພວກເຮົາຈະຕ້ອງໄດ້ວາງແຜນ ເພື່ອຈັດຕັ້ງປະຕິບັດແຜນງານຮ່ວມກັນໃນຕໍ່ໜ້າ.

(ກົງທະນູຄຳ ພົມພັດເສລີ)

(ນາງ ສຸພາວັນ ຫອມສະນິດ)

# ຮອງອຳນວຍການໃຫຍ່ທະນາຄານ ສົ່ງເສີມກະສິກຳ ເຂົ້າພົບການນຳຜົ້ງສາລີ



(ສພຊ) ວັນທີ 13 ກັນຍາ 2022 ທີ່ຫ້ອງຮັບແຂກສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ, ທ່ານ ມະໂນລິດ ຊຸມພົນພັກດີ ຮອງອຳນວຍການໃຫຍ່ທະນາຄານສົ່ງເສີມກະສິກຳ ຈຳກັດ ພ້ອມດ້ວຍທີມງານ ເຂົ້າພົບການນຳແຂວງຜົ້ງສາລີ ຕາງໜ້າໃຫ້ຄະນະນຳແຂວງຕ້ອນຮັບໂດຍທ່ານ ທອງສີ ເສົາສຸລິພົມ ປະທານ ສພຂ ຜົ້ງສາລີ.

ທ່ານ ມະໂນລິດ ຊຸມພົນພັກດີ ໄດ້ແຈ້ງຈຸດປະສົງການເຄື່ອນໄຫວວຽກຂອງຄະນະທີມງານ ຢູ່ແຂວງຜົ້ງສາລີ ໂດຍສະເພາະການປັບປຸງການຈັດຕັ້ງຂອງທະນາຄານສົ່ງເສີມກະສິກຳ ໃນທົ່ວປະເທດ ກໍຄືການປັບປຸງການຈັດຕັ້ງ ໂດຍສະເພາະການສັບປ່ຽນຫົວໜ້າທະນາຄານສົ່ງເສີມກະສິກຳ ຈຳກັດ ຢູ່ສາຂາແຂວງຜົ້ງສາລີ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງທະນາຄານສົ່ງເສີມກະສິກຳໄດ້ຮັບປະສິດທິພາບ, ມີຄວາມເຂັ້ມແຂງ.

ໂອກາດດຽວນີ້, ທ່ານ ທອງສີ ເສົາສຸພົມ ໄດ້ກ່າວສະແດງຄວາມຍິນດີຕໍ່ກັບການມາເຄື່ອນໄຫວຂອງຄະນະທີມງານ ແລະ ກ່າວຊົມເຊີຍຕໍ່ກັບຜົນສຳເລັດໃນການປັບປຸງກົງຈັກການຈັດຕັ້ງ ແນໃສ່ສ້າງຄວາມເຂັ້ມແຂງ ແລະ ການຍົກສູງຄຸນນະພາບໃນການເຄື່ອນໄຫວວຽກງານຂອງທະນາຄານສົ່ງເສີມກະສິກຳ. ພ້ອມກັນນັ້ນ, ທ່ານຍັງໄດ້ເນັ້ນບາງຫາຕໍ່ການເຄື່ອນໄຫວຂອງທະນາຄານສົ່ງເສີມກະສິກຳ ເປັນຕົ້ນແມ່ນການປະກອບສ່ວນຂອງທະນາຄານສົ່ງເສີມກະສິກຳ ເຂົ້າໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ ເພື່ອເປັນການຫັນເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ ພ້ອມທັງເອົາໃຈໃສ່ໃນການຄຸ້ມຄອງເງິນຕາທີ່ເຄື່ອນໄຫວຢູ່ນອກລະບົບທະນາຄານ ແລະ ການຄຸ້ມຄອງຮ້ານແລກປ່ຽນເງິນຕາໃຫ້ຢູ່ພາຍໃຕ້ການຄວບຄຸມຂອງທະນາຄານຕາມລະບຽບກົດໝາຍ; ເອົາໃຈໃສ່ເຜີຍແຜ່ບັນດານະໂຍບາຍຕ່າງໆຂອງທະນາຄານ ເພື່ອເຮັດໃຫ້ພໍ່ແມ່ປະຊາຊົນສາມາດເຂົ້າເຖິງແຫລ່ງທຶນ ເພື່ອນຳໄປພັດທະນາທຸລະກິດຄອບຄົວ ທັງນີ້ເພື່ອເຮັດໃຫ້ການພັດທະນາເສດຖະກິດຢູ່ແຂວງຜົ້ງສາລີໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສສຊ ເຂດ 4 ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງປາກແບງ



(ສພຊ) ໃນລະຫວ່າງວັນທີ 23-25 ສິງຫາ 2022 ທ່ານ ເລື່ອມ ສິນສີວິໄລ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ແລະ ທ່ານ ນາງ ທອງສະໄໝ ສີສຸທອນ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງປາກແບງ ໄດ້ເຄື່ອນໄຫວພົບປະພໍ່ແມ່ປະຊາຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຜົນ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ບ້ານຄຳ, ບ້ານສຸກໄຊ, ບ້ານຫ້ວຍແຊງຄຳ, ບ້ານດອນສະອາດ, ບ້ານໄຊຊະນະ ແລະ ສະໂມສອນເມືອງ ມີການນຳເມືອງ, ພະນັກງານຫລັກແຫລ່ງຂອງເມືອງ, ນາຍບ້ານ, ອົງການຈັດຕັ້ງບ້ານ ແລະ ປະຊາຊົນເຂົ້າຮ່ວມທັງໝົດ 447 ຍິງ 142 ຄົນ.

ການເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອພົບປະພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ເພື່ອສະເໜີໃຫ້ປະຊາຊົນ ຮັບຮູ້ ແລະ ມີຄວາມເຂົ້າໃຈວ່າກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາເນື້ອໃນບັນຫາສຳຄັນຫຍັງແດ່ ແລະ ບັນຫາທີ່ພົ້ນເດັ່ນອື່ນໆ ທີ່ສັງຄົມໃຫ້ຄວາມສົນໃຈ. ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດເຫັນ ແລະ ຄຳສະເໜີ ຂອງປະຊາຊົນ ທີ່ມີຕໍ່ ສສຂ ແລະ ສພຂ ໃນການຄຸ້ມຄອງບໍລິຫານລັດ ເປັນຕົ້ນການພັດທະນາພື້ນຖານໂຄງລ່າງ ແລະ ບັນຫາອື່ນໆ ຕໍ່ກັບຄຳຄິດເຫັນດັ່ງກ່າວນັ້ນທາງ ສສຊ-ສສຂ ໄດ້ຊີ້ແຈງກັບທີ່ແລ້ວ ແລະ ບາງບັນຫາຈະໄດ້ສະຫລຸບສັງລວມສົ່ງໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຄົ້ນຄວ້າປຶກສາຫາລື ແລະ ມອບໃຫ້ຄະນະກຳມະການສະເໜີຕໍ່ພາກສ່ວນກ່ຽວຂ້ອງຄົ້ນຄ້ວາພິຈາລະນາ ແລະ ແກ້ໄຂໃຫ້ຖືກຕ້ອງຕາມລະບຽບການ.

(ແສງພອນ ອິນນະລົງ)

# ໜ່ວຍຊາວໜຸ່ມ ສພຂ ຈຳປາສັກ ສະຫລຸບຕີລາຄາການຈັດຕັ້ງຂໍ້ແຂ່ງຂັນ 4 ບຸກ



(ສພຊ) ໃນວັນທີ 7 ກັນຍາ 2022 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໜ່ວຍຊາວໜຸ່ມ ສພຂ ຈຳປາສັກ ໄດ້ເປີດກອງປະຊຸມສະຫລຸບຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ໂດຍການເປັນປະທານຂອງສະຫາຍ ສົມສີ ມະນີນິນ ກຳມະການພັກແຂວງ, ເລຂາໜ່ວຍພັກຮາກຖານ ສພຂ; ມີສະຫາຍ ແພງວິໄລ ສີອາລຸນ ເລຂາໜ່ວຍຊາວໜຸ່ມ ສພຂ ແລະ ບັນດາສະຫາຍໃນຄະນະໜ່ວຍຊາວໜຸ່ມ, ຕາງໜ້າໃຫ້ອົງການຈັດຕັ້ງກຳມະບານ, ສະຫະພັນແມ່ຍິງ ແລະ ສະມາຊິກຊາວໜຸ່ມຂອງ ສພຂ ຈຳປາສັກເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຈາກສະຫາຍ ແພງວິໄລ ສີອາລຸນ ເຊິ່ງເຫັນໄດ້ຜົນງານດ້ານດີ ແລະ ຂໍ້ຄົງຄ້າງບາງດ້ານ ທີ່ຈະຕ້ອງໄດ້ເພີ່ມທະວີໃນການຈັດຕັ້ງປະຕິບັດໃຣຕໍ່ໜ້າ. ພ້ອມດຽວກັນ, ບັນດາສະຫາຍຜູ້ແທນກອງປະຊຸມໄດ້ປະກອບຄຳເຫັນຕໍ່ບາງເນື້ອໃນຮ່າງບົດສະຫລຸບ ເພື່ອປັບປຸງໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ. ຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຜ່ານລາຍຊື່ມະຫາຊົນກ້າວໜ້າ ທີ່ຈະປະເມີນໃນການຄັດເລືອກເຂົ້າເປັນເປົ້າໝາຍສະເໜີເຂົ້າເປັນສະມາຊິກພັກ.

ໂອກາດດັ່ງກ່າວ, ສະຫາຍ ສົມສີ ມະນີນິນ ປະທານກອງປະຊຸມ ໄດ້ມີຄຳເຫັນໂອ້ລົມ ເຊິ່ງ ສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ໝາກຜົນຜົນງານ ທີ່ໜ່ວຍຊາວໜຸ່ມ ສພຂ ຈຳປາສັກ ຍາດມາໄດ້ ພ້ອມທັງເນັ້ນໃຫ້ຄະນະ ແລະ ສະມາຊິກຊາວໜຸ່ມຂອງ ສພຂ ຈົ່ງສືບຕໍ່ຮັກສາມູນເຊື້ອ ແລະ ເຮັດສຳເລັດນ້າທີ່ຄວາມຮັບຜິດຊອບ ໂດຍສະເພາະໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດທິດທາງແຜນການທີ່ວາງໄວ້ໃນຕໍ່ໜ້າໃຫ້ຜົນສຳເລັດສູງ. ພ້ອມດຽວກັນ, ສະຫາຍຍັງໄດ້ໃຫ້ທິດຊີ້ນຳກ່ຽວກັບການປະເມີນສະມາຊິກຊາວໜຸ່ມ, ມະຫາຊົນກ້າວໜ້າທີ່ເປັນໝາຍຈະຂະຫຍາຍເຂົ້າເປັນສະມາຊິກພັກ ແລະ ກອງປະຊຸມໄດ້ດຳເນີນການປະເມີນດ້ວຍຮູບແບບການລົງຄະນະສຽງແບບປິດລັບ ເພື່ອຢັ້ງຢືນຖືກຄຸນທາດການເມືອງຕາມມາດຖານເງື່ອນໄຂທີ່ກຳນົດໄວ້ໃນລະບຽບການຂອງຊາວໜຸ່ມປະຕິວັດລາວ.

# ຄະນະປະຈຳ ສພຂ ຄຳມ່ວນ ຄົ້ນຄວ້າພິຈາລະນາຫລາຍບັນຫາສຳຄັນ



(ສພຊ) ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ໃນວັນທີ 8 ກັນຍາ 2022 ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ດຳເນີນກອງປະຊຸມສາມັນປະຈຳເດືອນສິງຫາ ຂອງຄະນະປະຈຳ ສພຂ ຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານຄະນະປະຈຳ ສພຂ ຄຳມ່ວນ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳ ສພຂ ແລະ ກຳມະການຄະນະປະຈຳສພຂຄຳມ່ວນ.

ພາຍຫລັງປະທານກ່າວເປີດກອງປະຊຸມ, ບັນດາທ່ານຄະນະປະຈຳ ສພຂ ຄຳມ່ວນ ໄດ້ຄົ້ນຄວ້າ-ພິຈາລະນາ ແລະ ຮັບຮອງ ແຕ່ລະບັນຫາສຳຄັນຄື: ຮ່າງບົດສະຫລຸບການເຄື່ອນໄຫວວຽກງານຂອງຄະນະປະຈຳ ສພຂ ຄຳມ່ວນ ປະຈຳເດືອນ 8 ແລະ ທິດທາງການເຄື່ອນໄຫວວຽກງານປະຈຳເດືອນ 9 ປີ 2022; ຮ່າງແຜນການການເຄື່ອນໄຫວພົບປະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຄຳມ່ວນ ຊຸດທີ II; ຮ່າງແຜນການຕ້ອນຮັບຄະນະຜູ້ແທນ ສພຂ ກວາງບິງ ສສ.ຫວຽດນາມ ເດີນທາງມາພົບປະແລກປ່ຽນບົດຮຽນກັບ ສພຂ ຄຳມ່ວນ ຊຸດທີ II ປະຈຳປີ 2022; ຮ່າງບົດສະຫລຸບການເຄື່ອນໄຫວວຽກງານໄລຍະສອງກອງປະຊຸມ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 2-3 ແລະ ທິດທາງຮອດກອງປະຊຸມສະໄໝສາມັນເທື່ອທີ4 ແລະ ບົດລາຍງານຜົນການປັບປຸງຮ່າງບົດລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາໃນຕໍ່ໜ້າ ຂອງຄະນະປະຈຳ ສພຂ ຄຳມ່ວນ; ບົດລາຍງານຜົນການປັບປຸງຮ່າງມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຄຳມ່ວນ ຊຸດທີ II ຈຳນວນ 4 ສະບັບ ແລະ ຄົ້ນຄວ້າ-ພິຈາລະນາກ່ຽວກັບການຄັດເລືອກໂຄງການພັດທະນາ ທີ່ມີຜົນກະທົບຕໍ່ຊີວິດການເປັນຂອງປະຊາຊົນ ຢູ່ພາຍໃນແຂວງຄຳມ່ວນ ທີ່ຈະສັງລວມສົ່ງໃຫ້ສະພາແຫ່ງຊາດ; ຄົ້ນຄວ້າ-ພິຈາລະນາ ກ່ຽວກັບການສ້າງຕັ້ງໜ່ວຍງານວຽກງານຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ຄົ້ນຄວ້າ-ພິຈາລະນາ ຄຳຮ້ອງທຸກຂອງປະຊາຊົນ.

ພ້ອມນັ້ນ, ຍັງໄດ້ຄົ້ນຄວ້າ-ພິຈາລະນາການສະເໜີຂອງອົງການປົກຄອງແຂວງຄຳມ່ວນ ຄື: ໜັງສືສະເໜີຂອງອົງການປົກຄອງແຂວງຄຳມ່ວນ ກ່ຽວກັບການຮັບຮອງ ແລະ ສະເໜີແຕ່ງຕັ້ງຫົວໜ້າອົງການໄອຍະການປະຊາຊົນ ເຂດ 1, ເຂດ 2 ຂອງແຂວງຄຳມ່ວນ; ໜັງສືສະເໜີຂອງອົງການປົກຄອງແຂວງຄຳມ່ວນ ກ່ຽວກັບການສະເໜີດັດແກ້ມູນຄ່າເພີ່ມ ໂຄງການແຜນການລົງທຶນຂອງລັດໃນ 3 ໂຄງການພັດທະນາທົ່ງຮາບເຊບັ້ງໄຟ ໄລຍະ 2 ຂອງແຂວງຄຳມ່ວນ; ໜັງສືສະເໜີຂອງອົງການຄອງແຂວງຄຳມ່ວນ ກ່ຽວກັບຮ່າງນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ.

ຈາກນັ້ນ, ບັນດາທ່ານຄະນະປະຈຳ ສພຂ ໄດ້ສຸມໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ ໃສ່ບັນດາບົດລາຍງານຕ່າງໆ ທີ່ນຳມາລາຍງານໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາທີ່ມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ແຂວງຄຳມ່ວນ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

(ເອື້ອ ມະໂນສິງ)

# ສພຂ ຈຳປາສັກ ໃຫ້ຄຳປຶກສາທາງດ້ານກົດໝາຍຕໍ່ປະຊາຊົນ 295 ເທື່ອຄົນ

ໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທ່ານ ສາຍທອງ ໄຊຍະວົງ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ທັງເປັນປະທານ ສພຂ ຈຳປາສັກ ໃຫ້ສຳພາດຕໍ່ສື່ມວນຊົນ ເຊິ່ງທ່ານໄດ້ກ່າວວ່າ: ຮູ້ສຶກເປັນກຽດ ແລະ ພາກພູມໃຈ ທີ່ໄດ້ມີໂອກາດໃຫ້ສຳພາດຕໍ່ສື່ມວນຊົນທຸກພາກສ່ວນ ຈຶ່ງຢາກຍົກໃຫ້ເຫັນຜົນງານອັນພົ້ນເດັ່ນໃນການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 15 ກໍຄືສະມາຊິກສະພາປະຊາຊົນແຂວງ (ສສຂ) ຈຳປາສັກ ຊຸດທີ II.

ພາຍຫລັງສຳເລັດການເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ໃນຄັ້ງວັນທີ 21 ກຸມພາ 2021 ທີ່ຜ່ານມາ. ສພຊ ຊຸດທີ IX ແລະ ສພຂ ຈຳປາສັກ ຊຸດທີ II ໄດ້ໄຂກອງປະຊຸມຄັ້ງປະຖົມມະລຶກຂອງຕົນຂຶ້ນ ຢ່າງເປັນທາງການ ເຊິ່ງກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ໄຂຂຶ້ນໃນລະຫວ່າງວັນທີ 22-26 ມີນາ 2021 ແລະ ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຈຳປາສັກ ຊຸດທີ II ໄຂຂຶ້ນໃນລະຫວ່າງວັນທີ 8-9 ເມສາ 2021. ການເຄື່ອນໄຫວວຽກງານຢູ່ໃນໄລຍະນີ້ແມ່ນຢູ່ໃນໄລຍະສະພາບການພາກພື້ນ ແລະ ສາກົນ ມີການຜັນແປໄປຢ່າງສະຫລັບສັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫລໍ່ແຫລມຫລາຍດ້ານ ທີ່ຄາດຄະເນໄດ້ຍາກ ບວກກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປລາວ ຂອງພວກເຮົາ, ເຖິງຢ່າງໃດກໍດີ ໃນໄລຍະໜຶ່ງປີກວ່າຜ່ານມາ, ພາຍໃຕ້ການນຳພາ-ຊີ້ນຳຂອງພັກ-ລັດ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 15 ກໍຄື ສສຂ ຈຳປາສັກ ໄດ້ເອົາໃຈໃສ່ເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍກຳນົດໄວ້ ໂດຍໄດ້ເອົາໃຈໃສ່ໃນການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການປຶກສາຫາລືວຽກງານສຳຄັນຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສ້າງຄວາມເປັນເອກະພາບໃນການຄົ້ນຄວ້າພິຈາລະນາຕົກລົງຮັບຮອງບັນດານິຕິກຳ, ບັນຫາສຳຄັນຂອງທ້ອງຖິ່ນ, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄົ້ນຄວ້າແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ, ບັນຫາທີ່ພົ້ນເດັ່ນທີ່ສັງຄົມໃຫ້ຄວາມສົນໃຈ ເຊັ່ນ:

**ດ້ານນິຕິບັນຍັດ:** ໄດ້ເຂົ້າຮ່ວມໃນການປະກອບຄຳຄິດເຫັນ ແລະ ພິຈາລະນາຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2021-2025) ຂອງ ສພຊ ທັງໝົດຈຳນວນ 96 ສະບັບ, ໃນນີ້ ສ້າງໃໝ່ 38 ສະບັບ ແລະ ປັບປຸງ 58 ສະບັບ; ພ້ອມນັ້ນ, ໄດ້ປະສານສົມທົບກັບ ສພຂ, ອົງການປົກຄອງແຂວງ ເພື່ອຈັດຕັ້ງການທາບທາມ, ປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນຂອງ ສພຊ ຊຸດທີ IX ໄດ້ທັງໝົດ 25 ສະບັບ; ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 1 ຈຳນວນ 4 ສະບັບ, ກອງປະຊຸມສະໄໝສາມັນເທື່ອທີ 2 ຈຳນວນ 11 ສະບັບ, ສຳລັບແຜນໃນກອງປະຊຸມສະໄໝສາມັນເທື່ອທີ 3 ມີຈຳນວນ 10 ສະບັບ ໃນນັ້ນ, ສ້າງໃໝ່ 3 ສະບັບ ແລະ ປັບປຸງ 7 ສະບັບ.

ນອກຈາກນີ້, ໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງນິຕິກຳໃຕ້ກົດໝາຍຂອງ ສພຊ ແລະ ຂອງລັດຖະບານ ຈຳນວນ 7 ສະບັບ. ສພຂ ຈຳປາສັກ ໄດ້ພິຈາລະນາຮັບຮອງເອົານິຕິກຳໃຕ້ກົດໝາຍຂອງທ້ອງຖິ່ນ ໄດ້ທັງໝົດ 15 ສະບັບ ໃນນີ້, ນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ (ຂໍ້ຕົກລົງຂອງທ່ານເຈົ້າແຂວງ) ຈຳນວນ 2 ສະບັບ ແລະ ນິຕິກຳໃຕ້ກົດໝາຍຂອງ ສພຂ ຈຳນວນ 13 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ:** ເຂົ້າຮ່ວມໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບັນຫາສຳຄັນຕ່າງໆ ທາງດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນ ທີ່ໄດ້ພິຈາລະນາ ແລະ ຮັບຮອງໃນກອງປະຊຸມ ສພຊ ເຊິ່ງສາມາດຮັບຮອງອອກເປັນມະຕິ 36 ສະບັບ; ໄດ້ປຶກສາຫາລືວຽກງານລະຫວ່າງ ຄະນະ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ຮ່ວມກັບກຳມາທິການວຽກງານສສຊ ກ່ຽວກັບກົງຈັກການຈັດຕັ້ງຂອງ ສພຂ ຊຸດທີ II, ກົງຈັກການຈັດຕັ້ງຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ໄດ້ພິຈາລະນາຮັບຮອງເອົາວາລະແຫ່ງຊາດ 2 ສະບັບ ເຊິ່ງເປັນບັນຫາພື້ນຖານຂອງປະເທດຊາດ ທີ່ມີຄວາມເຄັ່ງຮ້ອນ ແລະ ຮີບດ່ວນ ນັ້ນຄື: ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ເຂົ້າຮ່ວມໃນການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໃນກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນ ແລະ ກອງປະຊຸມຄະນະປະຈຳ ຂອງ ສພຂ ຊຸດທີ II ກ່ຽວກັບວຽກງານດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນ ເຊິ່ງສາມາດອອກມະຕິຮັບຮອງໄດ້ທັງໝົດ 18 ສະບັບ.



**ດ້ານການຕິດຕາມກວດກາ:** ໃນໄລຍະຜ່ານມາ ເຖິງແມ່ນຢູ່ໃນເງື່ອນໄຂສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ກໍຕາມ ແຕ່ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 15 ກໍຄື ສພຂ ຈຳປາສັກ ໄດ້ພະຍາຍາມເອົາໃຈໃສ່ຕິດຕາມກວດກາດ້ວຍຮູບການຕ່າງໆ ທີ່ສອດຄ່ອງກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ສະແດງອອກ ຄື:

ໄດ້ສົມທົບກັບຄະນະປະຈຳ ສພຂ ໄດ້ຊີ້ນຳບັນດາຄະນະກຳມະການຂອງ ສພຂ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາບັນດາຕົວເລກຄາດໝາຍ, ວຽກງານຕ່າງໆ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ເປັນຕົ້ນ: ບັນດາໂຄງການລົງທຶນຂອງລັດ, ການຜະລິດເປັນສິນຄ້າ, ການຈັດເກັບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດຂອງແຂວງ, ບັນດາຕົວເລກເປົ້າໝາຍສະຫະສະຫວັດເພື່ອການພັດທະນາແບບຍືນຍົງ (SDGs) ໃນຂົງເຂດວັດທະນະທຳ-ສັງຄົມ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຕາມທີ່ໄດ້ກຳນົດໄວ້ມະຕິກອງປະຊຸມ ສພຂ ຈຳປາສັກ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ.

ໄດ້ເອົາໃຈໃສ່ໃນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍຂອງແຂວງ ໃນນັ້ນແມ່ນໄດ້ລົງເລິກ ຕໍ່ການຈັດຕັ້ງປະຕິບັດວຽກງານຂອງເຈົ້າໜ້າທີ່ ຢູ່ໃນຂົງເຂດຕຸລາການ, ອົງການສືບສວນສອບສວນ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍຕິດພັນກັບວຽກງານຊຸກຍູ້ການປັບປຸງຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກຄະນະປົກປ້ອງກົດໝາຍຂັ້ນເມືອງ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ເພື່ອເຮັດໃຫ້ອົງການລັດ, ສັງຄົມ ມີຄວາມເຂັ້ມແຂງ ແລະ ຖືກຄຸ້ມຄອງດ້ວຍລະບຽບກົດໝາຍ.

ໃນດ້ານການແກ້ໄຂຜົນຂອງການຕິດຕາມກວດກາ ເພື່ອຮັບປະກັນໃຫ້ມີຜົນສັກສິດໃນການຈັດຕັ້ງປະຕິບັດ ຄະນະປະຈຳ ສພຂ ກໍ່ໄດ້ສະເໜີມາດຕະການຕ່າງໆ ໃນການແກ້ໄຂບັນຫາຮ່ວມກັນ ເຊັ່ນ: ການອອກມະຕິຮັບຮອງໃນກອງປະຊຸມຂອງຄະນະປະຈຳ ສພຂ, ການປະສານງານຮ່ວມລະຫວ່າງກຳມະການ ທີ່ກ່ຽວຂ້ອງຂອງ ສພຂ ກັບ ບັນດາຂະແໜງການຂອງແຂວງ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຊີ້ແຈງ ແລະ ລາຍງານເປັນລາຍລັກອັກສອນໃນແຕ່ລະໄລຍະ; ນອກຈາກນີ້, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 15 ແລະ ຄະນະ ສສຂ ໄດ້ປະສານສົມທົບກັບຄະນະປະຈຳ ສພຂ ເອົາໃຈໃສ່ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງໃນໄລຍະຜ່ານມາ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳທັງໝົດ 48 ເລື່ອງ, ໃນນັ້ນ ປະກອບມີລາຍລະອຽດ ຄື: ຄຳຮ້ອງຂໍຄວາມເປັນທຳທີ່ສິ້ນສຸດຂະບວນຍຸຕິທຳ ຈຳນວນ 31 ເລື່ອງ; ຄຳຮ້ອງຂໍຄວາມເປັນທຳທີ່ຍັງບໍ່ທັນສິ້ນສຸດຂະບວນຍຸຕິທຳ ຈຳນວນ 11 ເລື່ອງ; ຄຳຮ້ອງຂໍຄວາມເປັນທຳທີ່ຍັງບໍ່ທັນສິ້ນສຸດຂະບວນບໍລິຫານ ຈຳນວນ 6 ເລື່ອງ. ໃນຈຳນວນຄຳຮ້ອງດັ່ງກ່າວ, ຊຸກຍູ້ການແກ້ໄຂແລ້ວຈຳນວນ 45 ເລື່ອງ, ຍັງສືບຕໍ່ຄົ້ນຄ້ວາແກ້ໄຂ ຈຳນວນ 3 ເລື່ອງ ທັງອຳນວຍຄວາມສະດວກໃນການຮັບຕ້ອນ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍໃຫ້ແກ່ພະນັກງານ, ປະຊາຊົນ ທີ່ເຂົ້າມາຍື່ນຄຳຮ້ອງຂໍຄວາມເປັນທຳ ຢູ່ສະພາປະຊາຊົນແຂວງໄດ້ທັງໝົດ 295 ເທື່ອຄົນ.

ປະທານ ສພຂ ຈຳປາສັກ ຍັງໃຫ້ຮູ້ວ່າ: ຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຊ-ມະຕິກອງປະຊຸມ ສພຂ ແລະ ນິຕິກຳໃຕ້ກົດໝາຍຂອງ ສພຂ: ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 15 ໄດ້ຮ່ວມກັບຄະນະປະຈຳ ສພຂ ຈຳປາສັກ, ສສຂ ປະຈຳເຂດເລືອກຕັ້ງ 9 ຕົວເມືອງ 1 ນະຄອນ ແລະ ອົງການປົກຄອງແຂວງ, ເມືອງ, ບ້ານ ໄດ້ຮ່ວມກັນສ້າງແຜນກຳນົດເປົ້າໝາຍໃນແຕ່ລະຈຸດ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຈຳປາສັກ ຊຸດທີ II ຜ່ານການຈັດຕັ້ງປະຕິບັດຕົວຈິງສາມາດລົງພົບປະພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ທັງໝົດ 192 ຈຸດ, ປະກອບມີ 162 ບ້ານ, 28 ກົມກອງ, 2 ສະຖາບັນການສຶກສາ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 18.050 ຄົນ ຍິງ 7.341 ຄົນ ພ້ອມທັງໄດ້ຮັບຟັງເກັບກຳຄຳຄິດເຫັນຄຳສະເໜີຂອງປະຊາຊົນຈຳນວນ 469 ບັນຫາ ໃນນັ້ນ, ໄດ້ອະທິບາຍຊີ້ແຈງໃຫ້ປະຊາຊົນເຂົ້າໃຈກັບທີ່ 228 ບັນຫາ ແລະ ຮັບມາປະສານສົມທົບຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ 241 ບັນຫາ.

ຕິດພັນກັບການລົງເຄື່ອນໄຫວໃນແຕ່ລະຄັ້ງ ໄດ້ຮັບການສະໜັບສະໜູນຈາກພາກສ່ວນຕ່າງໆໃນສັງຄົມ ປະກອບເປັນວັດຖຸ, ເຄື່ອງບໍລິໂພກ, ອຸປະໂພກ ຈຳນວນໜຶ່ງ ທັງພາຍໃນ ແລະ ຕ່າງປະເທດ ລົງໄປມອບໃຫ້ບັນດາເມືອງ, ບ້ານໃນທົ່ວແຂວງ ລວມມູນຄ່າທັງໝົດ 49,3 ລ້ານກີບ.

## ເຜີຍແຜ່ເນື້ອໃນຜົນສຳເລັດສອງກອງປະຊຸມສຳຄັນ ຢູ່ເມືອງນາແລ



(ສພຊ) ວັນທີ 12 ກັນຍາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ເມືອງນາແລ ແຂວງຫລວງນ້ຳທາ ລວມທັງໝົດ 2 ຈຸດຄື: ສະໂມສອນເມືອງ ແລະ ບ້ານເລົາ ນຳໂດຍທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນ້ຳທາ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ; ເຂົ້າຮ່ວມຮັບຟັງມີ, ຄະນະນຳຂອງເມືອງ, ຄະນະພັກ, ຄະນະບັນຊາສອງກອງບັນຊາການ ປກຊ-ປກສ, ຫົວໜ້າ, ຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນອ້ອມຂ້າງແຂວງ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມ 200 ກວ່າທ່ານ.

ໂອກາດດັ່ງກ່າວ, ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາພື້ນຖານສຳຄັນຂອງປະເທດຊາດ ຄື: ວຽກງານຂອງລັດຖະບານ; ວຽກງານຂອງໄອຍະການປະຊາຊົນສູງສຸດ; ວຽກງານຂອງ ສພຊ; ວຽກງານສ້າງ ແລະ ປັບປຸງກົດໝາຍ; ໄດ້ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມສະພາແຫ່ງຊາດ ທັງໝົດ 20 ສະບັບ ດ້ວຍຄະແນນສຽງເຫັນດີຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ສະເລ່ຍຄະແນນສູງສຸດ 99% ແລະ ຕ່ຳສຸດ 79%. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ, ແມ່ນຫມາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາທ່ານ ສສຊ, ຄວາມຕັດສິນໃຈ ຂອງລັດຖະບານ, ກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມຄາດຫມາຍທີ່ວາງໄວ້, ນຳເອົາປະເທດຊາດກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ພ້ອມນັ້ນ, ຍັງໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫລວງນ້ຳທາ ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ ຄື: ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງແຂວງ; ຮັບຮອງເອົາບົດລາຍງານກ່ຽວກັບ ການຄຸ້ມຄອງລາຄາສິນຄ້າ ແລະ ການຄຸ້ມຄອງປ້ຳນ້ຳມັນພາຍໃນແຂວງກອງປະຊຸມ; ຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ; ຮັບຮອງຂໍ້ຕົກລົງຂອງເຈົ້າແຂວງຫລວງນ້ຳທາ ຈຳນວນ 2 ສະບັບ; ຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II.

ຫລັງຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມໄດ້ສະເໜີບັນຫາຂໍ້ຂ້ອງໃຈ, ຂໍ້ຫຍຸ້ງຍາກຕ່າງໆ ເພື່ອນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອນຳໄປແກ້ໄຂຕາມຄວາມເປັນຈິງ.

ໃນໂອກາດນີ້, ຄະນະຜູ້ແທນໄດ້ມອບເງິນຊ່ວຍເຫລືອຊື້ວັດສະດຸກໍ່ສ້າງສະໂມສອນກອງບັນຊາການທະຫານເມືອງນາແລ ຈຳນວນ 6 ລ້ານກີບ, ມອບໂດຍ ທ່ານ ຈັນທະສຸລິນ ໝັ້ນປະດິດ ແລະ ຮັບໂດຍທ່ານ ພັນໂທ ບຸນແພງ ໄຊສົງຄາມ ຫົວໜ້າກອງບັນຊາການທະຫານເມືອງນາແລ.

(ນາງ ອຳພອນ ສີປະເສີດ)




# ມໍລະດົກໂລກ ແລະ ສະຖານທີ່ມໍລະດົກໂລກ ໃນ ສປປລາວ

ມໍລະດົກໂລກ ແມ່ນສະຖານທີ່ທີ່ໄດ້ຮັບການຄັດເລືອກໂດຍອົງການ UNESCO ເຊິ່ງເລີ່ມຕັ້ງແຕ່ປີ 1972 ເພາະມີລັກສະນະທາງດ້ານວັດທະນະທຳ, ວິທະຍາສາດ ແລະ ດ້ານອື່ນໆ ອັນໄດ້ແກ່ສະຖານທີ່ທາງທຳມະຊາດ, ອານຸສາວະລີ, ສິ່ງກໍ່ສ້າງຕ່າງໆ ລວມໄປເຖິງຕົວເມືອງຕ່າງໆ ເພື່ອເປັນການບົ່ງບອກເຖິງຄຸນຄ່າສິ່ງທີ່ມະນຸດ ຫລື ທຳມະຊາດໄດ້ສ້າງຂຶ້ນມາ ແລະ ຄວນຈະປົກປັກຮັກສາສິ່ງເຫລົ່ານັ້ນເພື່ອໃຫ້ຕົກທອດໄປເຖິງລຸ້ນລູກລຸ້ນຫລານໃນອານາຄົດ ແລະ ໄດ້ຮັບການຄຸ້ມຄອງທາງດ້ານກົດໝາຍຕາມສົນທິສັນຍາ ສະຖານທີ່ເຫລົ່ານີ້ ຖືວ່າມີຄວາມສຳຄັນຕໍ່ປະໂຫຍດໂດຍລວມຂອງໂລກ ກໍຄືປະເທດທີ່ສະຖານທີ່ແຫ່ງນັ້ນຕັ້ງຢູ່; ຈາກໂຕເລກໃນເດືອນມີນາ ປີ 2022 ທົ່ວໂລກມີແຫລ່ງມໍລະດົກໂລກທັງໝົດ 1.154 ແຫ່ງ ໃນ 167 ປະເທດໃນທົ່ວໂລກ ເຊິ່ງແບ່ງເປັນມໍລະດົກໂລກທາງວັດທະນະທຳ 897 ແຫ່ງ, ມໍລະດົກໂລກທາງທຳມະຊາດ 218 ແຫ່ງ ແລະ ອີກ 39 ແຫ່ງເປັນແບບປະສົມປະສານລະຫວ່າງວັດທະນະທຳ ແລະ ທຳມະຊາດ.

ມໍລະດົກໂລກແຕ່ລະບ່ອນລ້ວນແຕ່ເປັນຊັບສິນຂອງປະເທດ ທີ່ເປັນເຈົ້າຂອງດິນແດນທີ່ສະຖານທີ່ມໍລະດົກໂລກຕັ້ງຢູ່ ແຕ່ໄດ້ຮັບພິຈາລະນາໃຫ້ເປັນຜົນປະໂຫຍດຂອງປະຊາຄົມໂລກ ລະຫວ່າງປະເທດໃນການອະນຸລັກຮັກສາມໍລະດົກແຫ່ງນັ້ນໆ; ໃນການພິຈາລະນາເຂົ້າເປັນມໍລະດົກໂລກແມ່ນໄດ້ມີການອອກຂໍ້ກຳນົດ ແລະ ຫລັກເກນ ເພື່ອພິຈາລະນາສະຖານທີ່ແຫ່ງໃດໜຶ່ງເຂົ້າເປັນມໍລະດົກໂລກ ແລະ ສະຖານທີ່ແຫ່ງນັ້ນຈະຕ້ອງມີລັກສະນະຕາມຫລັກເກນ, ມາດຖານ ຂໍ້ໃດຂໍ້ໜຶ່ງ ຫລື ຫລາຍຂໍ້ ຈຶ່ງຈະໄດ້ຮັບພິຈາລະນາເປັນມໍລະດົກໂລກ ເຊິ່ງມໍລະດົກທາງວັດທະນະທຳ ແລະ ມໍລະດົກທາງທຳມະຊາດມີຫລັກເກນ ດັ່ງນີ້:



**ຫລັກເກນທາງວັດທະນະທຳ**

1. ເປັນຕົວແທນໃນການສະແດງຜົນງານອັນໂດດເດັ່ນ ທີ່ສ້າງຂຶ້ນດ້ວຍຄວາມຄິດສ້າງສັນທີ່ສະຫລາດຫລັກແຫລມຂອງມະນຸດ;

2. ເປັນສິ່ງທີ່ມີອິດທິພົນ, ຊຸກຍູ້ໃຫ້ເກີດການພັດທະນາສືບທອດໃນດ້ານການອອກແບບທາງສະຖາປັດຕະຍະກຳ, ອະນຸສອນສະຖານ, ປະຕິມະກຳ, ສວນ ແລະ ພູມີທັດ ຕະຫລອດຈົນການພັດທະນາສິລະປະທີ່ກ່ຽວຂ້ອງ ຫລື ການພັດທະນາການຕັ້ງຖິ່ນຖານຂອງມະນຸດ ເຊິ່ງໄດ້ເກີດຂຶ້ນໃນໄລຍະເວລາໃນເວລາໃດເວລາໜຶ່ງ ຫລື ພື້ນທີ່ຕ່າງໆຂອງໂລກທີ່ຄົງໄວ້ໃນດ້ານວັດທະນະທຳ;

3. ເປັນສິ່ງທີ່ຢືນຢັນເຖິງຫລັກຖານຂອງວັດທະນະທຳ ຫລື ອະລິຍະທຳທີ່ປາກົດໃຫ້ເຫັນຢູ່ໃນປັດຈຸບັນ ຫລື ໄດ້ສາບສູນໄປແລ້ວ;

4. ເປັນຕົວຢ່າງອັນໂດດເດັ່ນຂອງປະເພດສິ່ງກໍ່ສ້າງອັນເປັນຕົວແທນຂອງການພັດທະນາທາງດ້ານວັດທະນະທຳ, ສັງຄົມ, ສິລະປະກຳ, ວິທະຍາສາດ, ເຕັກໂນໂລຊີ, ອຸດສາຫະກຳໃນປະຫວັດສາດຂອງມວນມະນຸດ;

5. ເປັນຕົວຢ່າງອັນໂດດເດັ່ນຂອງວັດທະນະທຳມະນຸດ, ຮີດຄອງປະເພນີໃນການສ້າງສະຖາປັດຕະຍາກຳ, ວິທີການກໍ່ສ້າງ ຫລື ການແຕ່ງຕັ້ງຖິ່ນຖານຂອງມະນຸດ ເຊິ່ງເສື່ອມສະຫລາຍໄດ້ງ່າຍຈາກຜົນກະທົບຈາກການປ່ຽນແປງທາງສັງຄົມ ແລະ ວັດທະນະທຳຕາມການເວລາ;

6. ມີຄວາມຄິດ ຫລື ຄວາມເຊື່ອທີ່ກ່ຽວຂ້ອງໂດຍກົງ ກັບເຫດການ ຫລື ມີຄວາມໂດດເດັ່ນໃນດ້ານປະຫວັດສາດ.

**ຫລັກເກນທາງທຳມະຊາດ**

1. ເປັນຕົວຢ່າງທີ່ໂດດເດັ່ນໃນການເປັນຕົວແທນຂອງຂະບວນວິວັດທະນາການສຳຄັນຕ່າງໆ ໃນອະດີດຂອງໂລກເຊັ່ນ: ຍຸກສັດເລືອຄານ, ຍຸກນ້ຳແຂງເຊິ່ງສະທ້ອນໃຫ້ເຫັນເຖິງການພັດທະນາຄວາມຫລາກຫລາຍ ຂອງທຳມະຊາດຢູ່ເທິງໜ້າໂລກ;

2. ເປັນຕົວຢ່າງທີ່ໂດດເດັ່ນໃນການເປັນຕົວແທນຂອງຂະບວນການປ່ຽນແປງທີ່ສຳຄັນທາງທໍລະນີວິທະຍາ ຫລື ການວິວັດທະນາການທາງຊີວະວິທະຍາ ແລະ ປະຕິສຳພັນຂອງມະນຸດຕໍ່ສິ່ງແວດລ້ອມທາງທຳມະຊາດທີ່ຍັງເກີດຂຶ້ນຢູ່ເຊັ່ນ: ພູໄຟ, ນາຂັ້ນໄດ...

3. ເປັນແຫລ່ງທີ່ເກີດຂຶ້ນຈາກປາກົດການທາງທຳມະຊາດ ທີ່ມີເອກະລັກທີ່ຫາຍາກ ຫລື ສວຍງາມເປັນພິເສດເຊັ່ນ: ແມ່ນ້ຳ, ນ້ຳຕົກຕາດ, ສາຍພູ...

4. ເປັນຖິ່ນທີ່ຢູ່ອາໄສຂອງຊະນິດສັດ ແລະ ພັນພືດຫາຍາກ ຫລື ຢູ່ໃນສະພາວະອັນຕະລາຍໃກ້ຈະສູນພັນ ແຕ່ຍັງຄົງດຳລົງຊີວິດຢູ່ໄດ້ ເຊິ່ງລວມເຖິງລະບົບນິເວດທີ່ເປັນແຫລ່ງລວມຄວາມອຸດົມສົມບູນຂອງພືດ ແລະ ສັດທີ່ທົ່ວໂລກໃຫ້ຄວາມສົນໃຈ.

ສຳລັບ ສປປລາວ ສະຖານທີ່ທີ່ໄດ້ຖືກພິຈາລະນາຮັບຮອງເປັນມໍລະດົກໂລກມີພຽງ 3 ແຫ່ງຄື: ນະຄອນຫລວງພະບາງ, ວັດພູ ແຂວງຈຳປາສັກ ແລະ ທົ່ງໄຫຫີນ ແຂວງຊຽງຂວາງ; ພ້ອມນັ້ນຍັງມີສະຖານທີ່ອື່ນໆທີ່ພວມຢູ່ໃນຂະບວນພິຈາລະນາ ເປັນຕົ້ນແມ່ນພະທາດຫລວງວຽງຈັນ, ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ແຂວງຄຳມ່ວນ.




# ສາຍໃຈລາວ

# ໂດຍ: ຕ.ສະຫວັນ

❊ ຊຸມແຊວງວົງຊາດເຊື້ອ
ສາມັກຄີເປັນພະລັງ
ໃຈໜັກແໜ້ນ
ຮັກແພງກັນຕ່ອມຕຸ້ມ

ພົງເຜົ່າພັນລາວ
ແຕ່ເໜືອເຖິງໃຕ້
ປວງຊົນທຸກເຜົ່າ
ແນວເນື້ອໜໍ່ລາວ

❊ ເທິງແຜ່ນດິນລຸ່ມຟ້າ
ໃຈປະສານສາມັກຄີ
ຊູຊ່ວຍກັນເສີມສ້າງ
ດຸດັ່ງແຕນຕໍ່ເຜີ້ງ

ປະຊາຊາດດຽວກັນ
ຮ່ວມແຮງໂຮມຕຸ້ມ
ສາຍສຳພັນຮັກທໍ່
ເປັນປຸ້ມກໍ່ຮັງ

❊ ລາວເອີຍລາວພີ່ນ້ອງ
ແມ່ນຢູ່ໄກເກີນແສນ
ກໍເປັນວົງເຄືອເຫງົ້າ
ເຮົາຮ່ວມທ້ອງ

ສາຍເລືອດດຽວກັນ
ໝື່ນມືຄວາຢື້
ຊຸມແຊວພັນເຜົ່າ
ໂດຍດ້າມແມ່ດຽວ

❊ ແມ່ຂອງໄຫລຫລັ່ງເລື້ອຍ
ປຽບດັ່ງສາຍໃຈລາວ
ຮັກແພງກັນເອົາໄວ້
ຍຸກໃໝ່ໃຈແຜ່ກວ້າງ

ເໝືອນເລືອດໃນກາຍ
ບໍ່ເຄີຍເຫີຍແຫ້ງ
ສາຍໃຍພັນຜູກ
ຄືນ້ຳແມ່ນະທີ

❊ ລາວເອີຍຮັກທໍ່ຫຸ້ມ
ໂຮມຮ່ວມແຮງ
ຊູເສີມສ້າງ
ຂາງຂີ່ຂ້າວ

ຊູຊ່ວຍຊອມແຊມ
ເຮັດເຮືອນທໍທ້ອງ
ປົວແປງແປວປ່ອງ
ເມືອງລາວໃຫ້ຮຸ່ງເຮືອງ

❊ ດຸດັ່ງແຕນຕໍ່ເຜີ້ງ
ສຸມກາຍາ
ກໍເປັນຊຸມແຊວເຊື້ອ
ແພງຕ່ອມຕຸ້ມ

ເຕີມຕໍ່ເຮືອນຮັງ
ເຫື່ອແຮງແປງປັ້ນ
ອຸທອນດຽວດອມຮ່ວມ
ເປັນປຸ້ມເຮັດຮັງ ຊອບແລ້ວ!



ສຸກສະບາຍຫາຍໂຣຄາ

# ປະໂຫຍດດີໆໃນຜັກ ແລະ ໝາກໄມ້ ທີ່ເຮົາມັກຕັດຖິ້ມ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

**1. ສ່ວນສີຂາວຂອງໝາກໂມ**

ສ່ວນສີຂາວໃກ້ເປືອກໝາກໂມ ມີສານຊີຣູລາຍ (ciruline) ທີ່ເປັນກົດອະມີໂນທີ່ດີຕໍ່ສຸຂະພາບ ແລະ ຫລອດເລືອດໃນຮ່າງກາຍ ສ່ວນທີ່ເປັນສີຂາວນັ້ນ ສາມາດເຮັດອາຫານແຊບໆເຊັ່ນ: ຕຳ ຫລື ຕົ້ມເຊັ່ນ: ແກງສົ້ມກໍໄດ້.

**2. ເສັ້ນໄຍທີ່ຢູ່ນຳໝາກກ້ຽງ**

ເສັ້ນໃຍໃນໝາກກ້ຽງທີ່ເຮົາມັກຈະດຶງອອກ ແລະ ແກະຖິ້ມກ່ອນກິນນັ້ນ ມີປະໂຫຍດຕໍ່ຮ່າງກາຍ ເພາະມີສານຕ້ານອະນຸມູນອິດສະຫລະ ແລະ ມີເສັ້ນໄຍທີ່ດີຕໍ່ລະບົບຂັບຖ່າຍ.

**3. ໃບກາລົດ**

ທ່ານຮູ້ບໍ່ວ່າ ໃບຂອງກາລົດມີວິຕາມິນຊີຫລາຍກວ່າຫົວກາລົດທີ່ເຮົາກິນ ນອກນັ້ນ, ໃບກາລົດຍັງມີວິຕາມິນເຄ ແລະໂພແທດຊຽມນຳອີກ ທ່ານລອງນຳມາເຮັດອາຫານເມນູງ່າຍໆ ເຊັ່ນໃບກາລົດຂົ້ວກັບໄຂ່.

**4. ກ້ານຜັກບ້ອກໂກລີ**

ບາງຄົນບໍ່ມັກກິນກ້ານບ້ອກໂຄລີເພາະວ່າມັນແຂງ ແລະ ລົດຊາດບໍ່ແຊບປານໃດ ແຕ່ຕົວຈິງແລ້ວ ກ້ານບ້ອກໂຄລີມີວິຕາມິນຫລາຍ ແລະ ມີເສັ້ນໄຍທີ່ອັດແໜ້ນນຳອີກ.

**5. ເປືອກໝາກໂປມ**

ຫລາຍທ່ານເລືອກທີ່ຈະປອກເປືອກໝາກໂປມອອກ ເພື່ອລົດຊາດທີ່ແຊບ ແລະ ຮູ້ສຶກສະອາດ ແຕ່ຄວາມຈິງແລ້ວເປືອກໝາກໂປມ ອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫລະທີ່ມີສ່ວນຊ່ວຍໃນການຕ້ານມະເຮັງ ແຕ່ຖ້າເປັນຫ່ວງວ່າເປືອກຂອງໝາກໂປມອາດຈະມີການເຄືອບສານເຄມີກໍສາມາດລ້າງໃຫ້ສະອາດໄດ້ ດ້ວຍການປະສົມນ້ຳໝາກນາວກັບເບກກິ້ງໂຊດາ ແລ້ວລ້າງອອກດ້ວຍນ້ຳສະອາດກ່ອນທີ່ຈະຮັບປະທານກິນໝາກໂປມ.

www.sanook.com



# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ ເພື່ອສະເໜີລັດຖະບານພິຈາລະນາ;

2. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

4. ຊີ້ນໍານໍາພາການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ, ສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບໃນຂອບເຂດທົ່ວປະເທດ;

6. ກໍານົດກົນໄກການຄຸ້ມຄອງກອງທຶນຄວບຄຸມຢາສູບ;

7. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

8. ສະໜັບສະໜູນການໃຫ້ຄໍາແນະນໍາ, ປຶກສາການອອກຢາສູບ, ການປິ່ນປົວ, ການບໍາບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບທີ່ຕ້ອງການອອກຢາສູບ;

9. ຊີ້ນໍາໃນການເຊື່ອມສານວຽກງານໃຫ້ຄໍາແນະນໍາ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບພາຍໃນໂຮງໝໍສູນກາງ, ພາກ;

10. ສ້າງ, ບໍາລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມຢາສູບ;

11. ຄົ້ນຄວ້າ, ປະກອບຄໍາເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ຜະລິດຕະພັນຢາສູບ;

12. ສັງລວມຂໍ້ມູນ ຮ້ານຂາຍຍົກ, ຂາຍຍ່ອຍ ແລະ ຈົດແຈ້ງເອກະສານ ກ່ຽວກັບການນໍາເຂົ້າຜະລິດຕະພັນຢາສູບ;

13. ໂຈະ ຫຼື ຍົກເລີກ, ສະເໜີໂຈະ ຫຼື ຍົກເລີກສັນຍາ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການທີ່ຂັດກັບກົດໝາຍສະບັບນີ້;

14. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

15. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

16. ປະສານສົມທົບກັບກະຊວງການເງິນໃນການກໍານົດໂຄງສ້າງ ແລະ ອັດຕາອາກອນ, ການຈັດເກັບລາຍຮັບ ແລະ ນໍາໃຊ້ກອງທຶນຄວບຄຸມຢາສູບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

17. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ;

18. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບຕໍ່ລັດຖະບານ ຢ່າງເປັນປົກກະຕິ;

19. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ;

3. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ພາຍໃນແຂວງ, ນະຄອນຫຼວງ;

4. ອອກ, ສະເໜີອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ສະໜັບສະໜູນການໃຫ້ຄໍາແນະນໍາ, ປຶກສາການອອກຢາສູບ, ການປິ່ນປົວ, ການບໍາບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບ ທີ່ຕ້ອງການອອກຢາສູບ;

6. ຊີ້ນໍາໃນການເຊື່ອມສານວຽກງານໃຫ້ຄໍາແນະນໍາ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ພາຍໃນໂຮງໝໍ ແຂວງ, ນະຄອນຫຼວງ;

ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວ7. ບຄຸມຢາສູບ;

8. ຄົ້ນຄວ້າ, ປະກອບຄໍາເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ຜະລິດຕະພັນຢາສູບ;

9. ປະສານສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການອອກໃບອະນຸຍາດໃຫ້ຜູ້ຂາຍຍົກຜະລິດຕະພັນຢາສູບ;

10. ພິຈາລະນາແກ້ໄຂຄໍາສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບຢາສູບ ຫຼື ສະເໜີກະຊວງສາທາລະນະສຸກ ເພື່ອຂໍທິດຊີ້ນໍາ ແລະ ແກ້ໄຂ;

11. ສະເໜີຂັ້ນເທິງ ກ່ຽວກັບການໂຈະ ຫຼື ຍົກເລີກສັນຍາ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການທີ່ຂັດກັບກົດໝາຍສະບັບນີ້;

12. ເກັບກໍາຂໍ້ມູນ ຮ້ານຂາຍຍົກ ແລະ ຈົດແຈ້ງເອກະສານ ກ່ຽວກັບການນໍາເຂົ້າຜະລິດຕະພັນຢາສູບ ພາຍໃນ ແຂວງ, ນະຄອນຫຼວງ;

13. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

14. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກ ແລະ ພາກສ່ວນອື່ນທີ່ ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມການມອບໝາຍ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຕໍ່ກະຊວງສາທາລະນະສຸກ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

17. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ;

3. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ພາຍໃນ ເມືອງ, ເທດສະບານ, ນະຄອນ;

4. ອອກ, ສະເໜີອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ສະໜັບສະໜູນການໃຫ້ຄໍາແນະນໍາ, ປຶກສາການອອກຢາສູບ, ການປິ່ນປົວ, ການບໍາບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບທີ່ຕ້ອງການອອກຢາສູບ;

6. ຊີ້ນໍາໃນການເຊື່ອມສານວຽກງານ ໃຫ້ຄໍາແນະນໍາ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບພາຍໃນ ໂຮງໝໍຊຸມຊົນ, ໂຮງໝໍນ້ອຍ ແລະ ຊຸມຊົນທີ່ຊົມໃຊ້ຢາສູບເປັນປະເພນີ;

7. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມຢາສູບ;

8. ປະສານສົມທົບກັບຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ເທດສະບານ, ນະ ຄອນ ໃນການອອກໃບອະນຸຍາດໃຫ້ຜູ້ຂາຍຍ່ອຍຜະລິດຕະພັນຢາສູບ;

9. ພິຈາລະນາແກ້ໄຂຄໍາສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບຢາສູບ ຫຼື ສະເໜີພະແນກສາທາລະນະສຸກຂັ້ນແຂວງ ເພື່ອຂໍທິດຊີ້ນໍາ ແລະ ແກ້ໄຂ;

10. ສະເໜີຂັ້ນເທິງ ກ່ຽວກັບການໂຈະ ຫຼື ຍົກເລີກ ສັນຍາ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການທີ່ຂັດກັບກົດໝາຍ;

11. ເກັບກໍາຂໍ້ມູນ ຮ້ານຂາຍຍ່ອຍຜະລິດຕະພັນຢາສູບ ພາຍໃນເມືອງ, ເທດສະບານ, ນະຄອນ;

12. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

13. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຕໍ່ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ ໂດຍສະເພາະ ການປະສານສົມທົບ, ຮ່ວມມື, ຄຸ້ມຄອງ, ຕິດຕາມ, ກວດກາ, ສະໜອງຂໍ້ມູນ, ຈັດກິດຈະກໍາ, ສຶກສາ, ຄົ້ນຄວ້າ ແລະ ການປະຕິບັດມາດຕະການ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຄວບຄຸມຢາສູບ

**ມາດຕາ 56 (ປັບປຸງ) ອົງການກວດກາວຽກງານຄວບຄຸມຢາສູບ**

ອົງການກວດກາວຽກງານຄວບຄຸມຢາສູບ ປະກອບດ້ວຍ:

ອ່ານຕໍ່ສະບັບໜ້າ...




## (...ແງ່ບວກຂອງສື່ ສັງຄົມອອນລາຍ...)

**ໂດຍ: ດົ້ນກົບເມກ**

ການໃຊ້ສື່ສັງຄົມອອນລາຍ Social Media ຂອງສັງຄົມ, ຜູ້ຂຽນສັງເກດເຫັນວ່າ: ເປັນການນໍາສະເໜີສິ່ງທີ່ເກີດຂຶ້ນຂອງຄົນໃນສັງຄົມທີ່ມີທັງ ແງ່ລົບ ແລະ ບວກ ເຊິ່ງເປັນດາບສອງຄົມໃນໂຕ ແຕ່ຜູ້ມີສະຕິປັນຍາກໍຈະນໍາເອົາບົດຮຽນອັນດີຂອງມັນ ຍົກຕົວຢ່າງ ຖ້າວ່າມີບັນຫາເກີດຂຶ້ນຢູ່ຈຸດໃດໜຶ່ງເມື່ອມີຜູ້ນໍາລົງເປັນຂ່າວທາງເຟສບຸກ(ອອນລາຍ) ສັງຄົມກໍຈະໄດ້ຮັບຮູ້ສິ່ງເກີດຂຶ້ນວ່ອງໄວທັນໃຈ.

ຜູ້ຂຽນມີທັດສະນະວ່າ ຄົນເຮົາປະພຶດແນວໃດ ກໍຈະໄດ້ຮັບຜົນຂອງກໍາຈາກສິ່ງທີ່ຕົນປະພຶດເຊັ່ນວ່າ ມີບຸກຄົນໃດໜຶ່ງເຮັດແນວບໍ່ດີ ເມື່ອສັງຄົມຮັບຮູ້ເອົາລົງເປັນຂ່າວກໍຈະເຮັດໃຫ້ຄົນທົ່ວສັງຄົມຊອກຫາຄວາມຈິງເກີດຂຶ້ນ; ເບິ່ງມູມບວກສື່ສັງຄົມອອນລາຍກໍເປັນຫູເປັນຕາໃຫ້ແກ່ການຈັດຕັ້ງ-ອໍານາດການປົກຄອງແຕ່ລະຂັ້ນໄດ້ດີ, ຢ້ອນຫລັງໄປຫລາຍປີ ກໍລະນີມີບຸກຄົນຢາກຄອບຄອງພະພຸດທະຮູບອົງໜຶ່ງ ທີ່ເປັນສົມບັດຂອງຊາດ ແຕ່ຖືກສັງຄົມອອນລາຍ ສອບສວນ-ຊັກຖາມທວງຫາ ຈຶ່ງເຮັດໃຫ້ມີການສົ່ງພະພຸດທະຮູບອົງນັ້ນຄືນແກ່ວັດ.

ອະດີດຜ່ານມາ ມີເລື່ອງເກີດຂຶ້ນກ່ຽວກັບການບໍລິຈາກ ທັງຄະດີພະ ແລະ ຊາວບ້ານ ທີ່ບາງກໍລະນີໄດ້ນໍາໃຊ້ສື່ອອນລາຍສ້າງຜົນປະໂຫຍດ-ຫາລາຍໄດ້ເຂົ້າຕົນເອງ-ສື່ສັງຄົມຈຶ່ງຮຽກຮ້ອງໃຫ້ກວດກາ-ສອບສວນ ຜົນປາກົດວ່າ ມີການຕົກລົງໃຫ້ພະສົງກ່ຽວຂ້ອງລາສິກຂາ ເຊິ່ງເປັນການຈັດຕັ້ງກ່ຽວຂ້ອງຄົງຕັດສິນຕາມ ທໍາ-ວິໄນ ແລະ ລະບຽບກົດໝາຍ; ເວົ້າເຖິງການຫາກິນນໍາຄົນເຈັບ-ຄົນຕາຍຂອງບາງຄົນນີ້ມີມາຍາວນານ ໃຜມີຫລ່ຽມສູງ-ໄວແນ່ກໍລອດໂຕໄປ...

ຜູ້ຂຽນເຄີຍເຫັນບາງຄົນໃຊ້ອ້າງໜ້າຄົນຕາຍຫາເງິນເຂົ້າຖົງຫລາຍລາຍ ເຂົ້າທໍານອງຄົນເປັນຂາຍຄົນຕາຍກິນກໍມີ; ເຮັດຫຍັງກໍໃຫ້ຄໍານຶງເຖິງຄວາມຖືກຕ້ອງເໝາະສົມແດ່ເນີ!




**ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄໍາ ພິພັດເສລີ**

35. ໂທສານຸໂທດ ໝາຍເຖິງ ການກະທໍາຜິດທີ່ກົດໝາຍໄດ້ກໍານົດໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບຫລື ໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ສິບ ປີ ແລະ ໂທດປັບໃໝ;

36. ຄະຣຸໂທດ ໝາຍເຖິງ ການກະທໍາຜິດທີ່ກົດໝາຍໄດ້ກໍານົດໂທດຕັດອິດສະລະພາບ ແຕ່ ຫ້າ ປີຂຶ້ນໄປຫາ ຕະຫລອດຊີວິດ ພ້ອມທັງໂທດປັບໃໝ ແລະ ໂທດປະຫານຊີວິດ.

# ສປຊ ຕັ້ງເຄື່ອງມືລະດົມທຶນການສຶກສາສາກົນ ສຳລັບປະເທດທີ່ມີລາຍໄດ້ຕ່ຳ-ປານກາງ

ແປ ແລະ ຮຽບຮຽງ: ທະນາກອນ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ເມື່ອວັນທີ 17 ກັນຍາ 2022 ອົງການສະຫະປະຊາຊາດ (ສປຊ) ໄດ້ສ້າງຕັ້ງເຄື່ອງມືລະດົມທຶນການສຶກສາສາກົນສຳລັບປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ ໂດຍມີຈຸດປະສົງເພື່ອສະໜອງທຶນການສຶກສາໃຫ້ກັບຊາວໜຸ່ມເຍົາວະຊົນ ແລະ ເປົ້າໝາຍອື່ນໆຂອງປະເທດເຫລົ່ານີ້.

ທ່ານອັນໂຕນີໂອ ກູເຕີເຣັສ ເລຂາທິການໃຫຍ່ອົງການ ສປຊ ໄດ້ກ່າວໃນກອງປະຊຸມຖະແຫລງຂ່າວວ່າ: ນັບແຕ່ເກີດມີການແຜ່ລະບາດຂອງພະຍາດໂຄວິດ-19 ເປັນຕົ້ນມາຫລາຍປະເທດໄດ້ຫລຸດຜ່ອນລາຍຈ່າຍດ້ານການສຶກສາ ແຕ່ການສຶກສາແມ່ນປັດໄຈສັນຕິພາບ ຄວາມຈະເລີນຮຸ່ງເຮືອງ ແລະ ຄວາມສະຫງົບທາງສັງຄົມ ການຫລຸດຜ່ອນການລົງທຶນດ້ານການສຶກສາ ຈະພາໃຫ້ເກີດວິກິດການທີ່ໜັກໜ່ວງກວ່າເກົ່າ.

ທ່ານກ່າວຕື່ມວ່າ: ປະເທດພວມພັດທະນາຫລາຍໆປະເທດ ຕ້ອງການການສະໜັບສະໜູນດ້ານການສຶກສາຢ່າງຮີບດ່ວນ ເຄື່ອງມືລະດົມທຶນການສຶກສາສາກົນແມ່ນສ້າງຕັ້ງຂຶ້ນເພື່ອເລື່ອງນີ້ ເປົ້າໝາຍຂອງການຊ່ວຍເຫລືອຕົ້ນຕໍແມ່ນຊາວໜຸ່ມເຍົາວະຊົນຂອງປະເທດທີ່ມີລາຍໄດ້ຕ່ຳ ແລະ ປານກາງ ລວມທັງເດັກນ້ອຍພະເນຈອນ ແລະ ເດັກນ້ອຍທີ່ເປັນຊາວອົບພະຍົບ.

ອີງຕາມການລາຍງານໃຫ້ຮູ້ວ່າ: ເຄື່ອງມືລະດົມທຶນການສຶກສາສາກົນແມ່ນນຳໃຊ້ແບບວິທີໃຫ້ການບໍລິຈາກໂດຍກົງ ແລະ ຫລັກປະກັນດ້ານການລະດົມທຶນ ຄາດວ່າ ໂຄງການງວດທຳອິດຈະເລີ່ມດຳເນີນໃນປີ 2023.

**ແຫລ່ງຂ່າວ: CRI**

# ອາຊຽນ ຕ້ອງຮ່ວມກັນສະໜັບສະໜູນສັນຕິພາບ ສະຖຽນລະພາບຄວາມຮຸ່ງເຮືອງໃນພາກພື້ນ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ຜູ້ນຳກຳປູເຈຍຮຽກຮ້ອງສະມາຊິກອາຊຽນເພີ່ມຄວາມເປັນເອກະພາບ ໃນການຮັບມືຄວາມທ້າທາຍສຳຄັນ ຫລາຍປະການ ເພື່ອຄຸ້ມຄອງສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ.*

ວັນທີ 12 ກັນຍາ 2022 ທ່ານ ຮຸນເຊນ ນາຍົກລັດຖະມົນຕີກຳປູເຈຍ ໃນຖານະປະທານສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ (ອາຊຽນ) ປະຈຳປີນີ້ ຖະແຫລງໃນພິທີເປີດກອງປະຊຸມການເປັນຜູ້ນຳ ແລະ ການເປັນຫຸ້ນສ່ວນອາຊຽນ ຢູ່ນະຄອນຫລວງພະນົມເປັນ ໃນວັນທີ 12 ກັນຍາວ່າ: ໃນຂະນະທີ່ການແຂ່ງຂັນທາງພູມສາດກຳລັງຮ້ອນແຮງ ອາຊຽນຕ້ອງເປັນແບບຢ່າງ ແລະ ເຮັດວຽກຮ່ວມກັນເພື່ອສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງໃນພາກພື້ນ ດ້ວຍການສົ່ງເສີມຄວາມສາມັກຄີ ແລະ ການເປັນສູນກາງຂອງອາຊຽນຕະຫລອດຈົນຍຶດໝັ້ນການເປັນຫຸ້ນສ່ວນ ແລະ ກົນໄກພະຫຸພາຄີຢ່າງເຂັ້ມງວດ.

ນອກຈາກນັ້ນ, ອາຊຽນຕ້ອງມີບົດບາດເປັນສູນກາງ ແລະ ເປັນພື້ນທີ່ ສຳລັບການເຈລະຈາ ແລະ ການຮ່ວມມື ພ້ອມທັງສົ່ງເສີມໂຄງສ້າງລະດັບພາກພື້ນທີ່ເປີດກວ້າງ, ໂປ່ງໃສ, ຄວບຄຸມ ແລະ ທ່ານ ຮຸນເຊນ ກ່າວວ່າ: ກຳປູເຈຍໃນຖານະປະທານອາຊຽນ ໄດ້ປະຕິບັດໜ້າທີ່ຢ່າງແຂງແຮງເພື່ອຂະຫຍາຍ ແລະ ເສີມສ້າງການຮ່ວມມື ແລະ ການເປັນຫຸ້ນສ່ວນຂອງອາຊຽນ ໃນຫລາກຫລາຍດ້ານ ແລະ ຮູບແບບ ເຊິ່ງຄວບຄຸມທຸກພິຕິທີ່ກ່ຽວຂ້ອງກັບສັງຄົມ, ເສດຖະກິດ, ການຄ້າ ແລະ ການລົງທຶນກັບກຸ່ມມິດປະເທດ, ຫຸ້ນສ່ວນການພັດທະນາ ແລະ ປະຊາຄົມສາກົນ.

ໃນອີກດ້ານໜຶ່ງ, ທ່ານ ເຮັງ ສຳຣິນ ປະທານລັດຖະສະພາຂອງກຳປູເຈຍ ຢ້ຽມຢາມຫວຽດນາມ ແລະ ລາວຢ່າງ ເປັນທາງການ ໃນອາທິດຜ່ານມາ ເພື່ອສົ່ງເສີມຄວາມແຂງແຮງ ແລະ ຂະຫຍາຍມິດຕະພາບ ຕະຫລອດຈົນການຮ່ວມມືລະຫວ່າງກຳປູເຈຍກັບຫວຽດນາມ ລວມທັງລະຫວ່າງກຳປູເຈຍກັບລາວ ໂດຍຢູ່ນະຄອນຫລວງຮ່າໂນ້ຍ, ທ່ານ ເຮັງ ສຳຣິນ ເຂົ້າຢ້ຽມຢາມທ່ານ ຫງວຽນ ຝູ ຈ້ອງ ເລຂາທິການພັກກອມມູນິດຫວຽດນາມ, ປະທານປະເທດ ຫງວຽນ ຊວນ ຟຸກ ແລະ ນາຍົກລັດຖະມົນຕີ ຟາມ ມິງ ຈິງ.

ສ່ວນຢູ່ນະຄອນຫລວງວຽງຈັນ, ທ່ານ ເຮັງ ສຳຣິນ ເຂົ້າຢ້ຽມຢາມທ່ານ ໄຊສົມພອນ ພົມວິຫານ, ທ່ານ ທອງລຸນ ສີສຸລິດ ປະທານປະເທດລາວ ແລະ ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີລາວ.

**ແຫລ່ງຂ່າວ: Xinhua**










ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK






| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |